ສາລະບານ


**ພາກທີ I ບົດບັນຍັດທົ່ວໄປ ........ 1**

ມາດຕາ 1 ຈຸດປະສົງ ........ 1

ມາດຕາ 2 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 2

ມາດຕາ 3 ການອະທິບາຍຄຳສັບ ........ 2

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 3

ມາດຕາ 5 ຫຼັກການກ່ຽວກັບວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 4

ມາດຕາ 6 ຂອບເຂດການນຳໃຊ້ ........ 4

ມາດຕາ 7 ການຮ່ວມມືສາກົນ ........ 4

**ພາກທີ II ຮູບການ, ຮູບແບບ ແລະ ລັກສະນະ ຂອງການລົງທຶນຮ່ວມ, ການກຳນົດ ຮູບແບບ ແລະ ອາຍຸສັນຍາ ........ 4**

ມາດຕາ 8 ຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 5

ມາດຕາ 9 ການລົງທຶນຮ່ວມໂດຍກົງຂອງລັດ ........ 5

ມາດຕາ 10 ການລົງທຶນຮ່ວມໂດຍກົງຂອງລັດ ........ 5

ມາດຕາ 11 ຮູບແບບລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 5

ມາດຕາ 12 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ ........ 5

ມາດຕາ 13 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດຳເນີນງານ ........ 6

ມາດຕາ 14 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ ........ 6

ມາດຕາ 15 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ມອບໂອນ ........ 6

ມາດຕາ 16 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ ........ 6

ມາດຕາ 17 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ ........ 7

ມາດຕາ 18 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ ........ 7

ມາດຕາ 19 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ 7

ມາດຕາ 20 ລັກສະນະ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 7

ມາດຕາ 21 ການກຳນົດ ຮູບແບບ ແລະ ອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 8
**ພາກທີ III ການກະກຽມ, ການພິຈາລະນາ ແລະ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 8**
**ໝວດທີ 1 ການກະກຽມ ແລະ ການພິຈາລະນາ ........ 8**
ມາດຕາ 22 ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 8
ມາດຕາ 23 ການສະເໜີ ແລະ ການພິຈາລະນາ ບົດສະເໜີເບື້ອງຕົ້ນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 8
ມາດຕາ 24 ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ 9
ມາດຕາ 25 ເງື່ອນໄຂ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ 9
ມາດຕາ 26 ການສະເໜີ ແລະ ການພິຈາລະນາ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 9
ມາດຕາ 27 ບົດວິພາກເສດຖະກິດ-ເຕັກນິກ ຂອງ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 10
ມາດຕາ 28 ການສະເໜີ ແລະ ການພິຈາລະນາ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 11
**ໝວດທີ 2 ການປະມູນໂຄງການ ........ 11**
ມາດຕາ 29 ການປະມູນໂຄງການ ........ 11
ມາດຕາ 30 ຫຼັກການ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 12
ມາດຕາ 31 ເອກະສານການປະມູນ ........ 12
ມາດຕາ 32 ຂັ້ນຕອນການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 13
ມາດຕາ 33 ຄະນະກຳມະການປະມູນ ........ 13
ມາດຕາ 34 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະມູນ ........ 13
**ພາກທີ IV ສັນຍາ ແລະ ເນື້ອໃນຂອງສັນຍາ, ການພິຈາລະນາ ແລະ ການເຊັນ ສັນຍາ, ການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາ ........ 14**
**ໝວດທີ 1 ສັນຍາ ແລະ ເນື້ອໃນຂອງສັນຍາ ........ 14**
ມາດຕາ 35 ສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 14
ມາດຕາ 36 ເນື້ອໃນຂອງສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ........ 14
**ໝວດທີ 2 ການພິຈາລະນາ ແລະ ການເຊັນ ສັນຍາ ........ 15**
ມາດຕາ 37 ຂັ້ນຕອນການພິຈາລະນາສັນຍາ ........ 15
ມາດຕາ 38 ຂັ້ນຕອນການເຊັນສັນຍາ ........ 16
**ໝວດທີ 3 ການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາ ........ 16**

ມາດຕາ 39 ການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ...16
**ພາກທີ V ການຈັດຕັ້ງຮັບຜິດຊອບ ແລະ ການຈັດຕັ້ງປະຕິບັດ ໂຄງການລົງທຶນຮ່ວມ........................16**
**ໝວດທີ 1 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ........................................................................................17**
ມາດຕາ 40 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.......................................................................................................17
ມາດຕາ 41 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.................................................................................17
ມາດຕາ 42 ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ...............................18
ມາດຕາ 43 ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.........18
**ໝວດທີ 2 ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ...........................................................19**
ມາດຕາ 44 ຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ...............19
ມາດຕາ 45 ສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ.................................................................19
ມາດຕາ 46 ສິດ ແລະ ພັນທະ ຂອງພາກເອກະຊົນ.....................................................................20
**ໝວດທີ 3 ການສະໜັບສະໜູນຂອງລັດຖະບານ ......................................................................21**
ມາດຕາ 47 ການສະໜັບສະໜູນຂອງລັດຖະບານ ......................................................................21
ມາດຕາ 48 ການສະໜັບສະໜູນດ້ານນິຕິກຳ.............................................................................22
ມາດຕາ 49 ການສະໜັບສະໜູນດ້ານການເງິນ...........................................................................22
ມາດຕາ 50 ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ ............................................................22
ມາດຕາ 51 ການສົ່ງເສີມ ວິສາຫະກິດ, ຜະລິດຕະພັນ ແລະ ການບໍລິການພາຍໃນ ............................22
**ໝວດທີ 4 ການຮັບປະກັນ ແລະ ການຄ້ຳປະກັນ ....................................................................23**
ມາດຕາ 52 ການຮັບປະກັນ ..................................................................................................23
ມາດຕາ 53 ການຄ້ຳປະກັນ...................................................................................................23
ມາດຕາ 54 ການຮັກສາຄວາມລັບ..........................................................................................23
**ໝວດທີ 5 ການຕິດຕາມ ກວດກາ ແລະ ການປະເມີນຜົນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ..........................................................................................24**
ມາດຕາ 55 ຄວາມຮັບຜິດຊອບລວມໃນການ ຕິດຕາມ ກວດກາ ແລະ ການປະເມີນຜົນ ໂຄງການ..........24
ມາດຕາ 56 ຄວາມຮັບຜິດຊອບຂອງ ຫ້ອງການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.24
ມາດຕາ 57 ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ ................................................................25
ມາດຕາ 58 ຄວາມຮັບຜິດຊອບຂອງບໍລິສັດໂຄງການ...................................................................25
**ພາກທີ VI ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ...............26**
ມາດຕາ 59 ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.............26

ມາດຕາ 60 ແຫຼ່ງກອງທຶນ ....................................................................................................26
ມາດຕາ 61 ເປົ້າໝາຍການນຳໃຊ້ກອງທຶນ..........................................................................................26
ມາດຕາ 62 ການບັນຊີ ແລະ ງົບປະມານ..........................................................................................26
ມາດຕາ 63 ການຄຸ້ມຄອງບໍລິຫານກອງທຶນ ......................................................................................27
**ພາກທີ VII ຂໍ້ຫ້າມ.........................................................................................................................27**
ມາດຕາ 64 ຂໍ້ຫ້າມທົ່ວໄປ..................................................................................................................27
ມາດຕາ 65 ຂໍ້ຫ້າມ ສຳລັບເຈົ້າຂອງໂຄງການ ......................................................................................27
ມາດຕາ 66 ຂໍ້ຫ້າມ ສຳລັບ ຄະນະກຳມະການປະມູນ.............................................................................28
ມາດຕາ 67 ຂໍ້ຫ້າມ ສຳລັບ ທີ່ປຶກສາໂຄງການ ....................................................................................28
ມາດຕາ 68 ຂໍ້ຫ້າມ ສຳລັບ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ໄດ້ຮັບຄັດເລືອກ......................29
**ພາກທີ VIII ການແກ້ໄຂຂໍ້ຂັດແຍ່ງ......................................................................................................30**
ມາດຕາ 69 ປະເພດການແກ້ໄຂຂໍ້ຂັດແຍ່ງ..........................................................................................30
ມາດຕາ 70 ການແກ້ໄຂດ້ວຍການປະນີປະນອມກັນ ..............................................................................30
ມາດຕາ 71 ການແກ້ໄຂທາງດ້ານບໍລິຫານ...........................................................................................30
ມາດຕາ 72 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ..........................................30
ມາດຕາ 73 ການແກ້ໄຂຮ້ອງຟ້ອງຕໍ່ສານ.............................................................................................31
**ພາກທີ IX ການຄຸ້ມຄອງ ແລະ ການກວດກາ ວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ..................................................................................................................................31**
**ໝວດທີ 1 ການຄຸ້ມຄອງ.....................................................................................................................31**
ມາດຕາ 74 ອົງການຄຸ້ມຄອງ................................................................................................................31
ມາດຕາ 75 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ......................................................32
ມາດຕາ 76 ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ.............32
ມາດຕາ 77 ສິດ ແລະ ໜ້າທີ່ ຂອງຫ້ອງການ ແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ33
ມາດຕາ 78 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ...............................................................................34
**ໝວດທີ 2 ການກວດກາ......................................................................................................................34**
ມາດຕາ 79 ອົງການກວດກາ.................................................................................................................34
ມາດຕາ 80 ເນື້ອໃນການກວດກາ .........................................................................................................34
ມາດຕາ 81 ຮູບການການກວດກາ .........................................................................................................35
**ພາກທີ X ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.........................................................35**
ມາດຕາ 82 ນະໂຍບາຍຕໍ່ຜູ້ມີຜົນງານ...................................................................................................35
ມາດຕາ 83 ມາດຕະການຕໍ່ຜູ້ລະເມີດ....................................................................................................35
ມາດຕາ 84 ມາດຕະການສຶກສາອົບຮົມ..................................................................................................36

ມາດຕາ 85 ມາດຕະການທາງວິໄນ ........................................................................36
ມາດຕາ 86 ມາດຕະການປັບໄໝ ........................................................................36
ມາດຕາ 87 ມາດຕະການທາງແພ່ງ ........................................................................36
ມາດຕາ 88 ມາດຕະການທາງອາຍາ ........................................................................36
**ພາກທີ XI ບົດບັນຍັດສຸດທ້າຍ ........................................................................36**
ມາດຕາ 89 ການຈັດຕັ້ງປະຕິບັດ ........................................................................36
ມາດຕາ 90 ຜົນສັກສິດ ........................................................................37

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ)
# ດຳລັດ
# ວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພຶດສະພາ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການລົງທຶນຂອງລັດ (ສະບັບປັບປຸງ) ເລກທີ 72/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ເລກທີ 71/ສພຊ, ລົງວັນທີ 16 ທັນວາ 2016;
- ອີງຕາມ ໜັງສືສະເໜີຂອງ ກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ..............ລົງວັນທີ.................

## ລັດຖະບານອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຮັບປະກັນໃຫ້ ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ, ຍຸຕິທຳ, ໂປ່ງໃສ, ກວດສອບໄດ້ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ ແນໃສ່ ສົ່ງເສີມການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ, ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງລັດ, ເອກະຊົນ ແລະ ປະຊາຊົນ ປະກອບສ່ວນເຂົ້າ

ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນຄົງຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຂຽນເປັນພາສາອັງກິດ Public Private Partnership: "PPP" ແມ່ນ ກິດຈະການຮ່ວມລົງທຶນ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ເອກະຊົນເປັນຜູ້ລົງທຶນທັງໝົດ ເຂົ້າໃນການພັດທະນາໂຄງລ່າງພື້ນຖານ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ພາຍໃຕ້ສັນຍາການລົງທຶນຮ່ວມ ໃນກຳນົດເວລາອັນແນ່ນອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ມີຄວາມໝາຍດັ່ງນີ້:

1. **ຜູ້ປະມູນ ແລະ ຜູ້ເຂົ້າຮ່ວມຄັດເລືອກ** ໝາຍເຖິງ ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ມີຄຸນວຸດທິທີ່ເໝາະສົມເພື່ອເຂົ້າຮ່ວມແຂ່ງຂັນ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. **ຜູ້ໃຫ້ທຶນ** ໝາຍເຖິງ ປະເທດ, ສະຖາບັນການເງິນພາຍໃນ ແລະ ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ທີ່ສະໜອງເງິນກູ້/ສິນເຊື່ອ ແລະ/ຫຼື ໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ/ຫຼື ເງິນທຶນເພື່ອສົ່ງເສີມການພັດທະນາດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

3. **ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ** ໝາຍເຖິງ ເອກະສານ ທີ່ກຳນົດຮູບແບບລັກສະນະຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ສະແດງໃຫ້ເຫັນ ຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ການເງິນ, ງົບປະມານ, ຄວາມຄຸ້ມຄ່າໃນການລົງທຶນ, ຄວາມສອດຄ່ອງທາງດ້ານກົດໝາຍ, ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ, ລັກສະນະຂອງຄວາມສ່ຽງ, ຄວາມຍືນຍົງຂອງໂຄງການ, ບັນຫາດ້ານສິ່ງແວດລ້ອມ ແລະ ສັງຄົມ, ບັນຫາບົດບາດຍິງ-ຊາຍ, ນະໂຍບາຍສະໜັບສະໜູນຂອງລັດຖະບານຕໍ່ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ (ຖ້າຫາກມີຄວາມຈຳເປັນ);

4. **ລັດຖະບານ** ໝາຍເຖິງ ກະຊວງ, ອົງການ, ແຂວງ, ນະຄອນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

5. **ການສະໜັບສະໜູນຂອງລັດຖະບານ** ໝາຍເຖິງ ການສະໜັບສະໜູນທາງດ້ານນິຕິກຳ, ດ້ານການເງິນ ແລະ ດ້ານນະໂຍບາຍຕ່າງໆ ຕາມດຳລັດສະບັບນີ້;

6. **ບົດສະເໜີເບື້ອງຕົ້ນ** ໝາຍເຖິງ ບົດສະເໜີໂຄງການໂດຍຫຍໍ້ ທີ່ສ້າງຂຶ້ນໂດຍ ສອດຄ່ອງກັບດຳລັດສະບັບນີ້;

7. **ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ທີ່ຖືກສ້າງຕັ້ງຂຶ້ນຕາມການກຳນົດຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;

8. **ການຊ່ວຍເຫຼືອທາງການເພື່ອການພັດທະນາ** ໝາຍເຖິງ ການຊ່ວຍເຫຼືອທາງດ້ານວິຊາການ, ທຶນກູ້ຢືມເງື່ອນໄຂຜ່ອນຜັນ, ທຶນຊ່ວຍເຫຼືອລ້າ, ການຊ່ວຍເຫຼືອເປັນວັດຖຸ, ການຊ່ວຍເຫຼືອ ດ້ານມະນຸດສະທຳ ແລະ ການຊ່ວຍເຫຼືອສຸກເສີນຕ່າງໆ ທີ່ລັດຖະບານໄດ້ຮັບຈາກຜູ້ໃຫ້ການຊ່ວຍເຫຼືອຕ່າງປະເທດ ເພື່ອໃຊ້ໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ;

9. **ພາກເອກະຊົນ** ໝາຍເຖິງ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກລົງທຶນຮ່ວມໃນກິດຈະການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ລົງທຶນທັງໝົດ ເຂົ້າໃນການພັດທະນາໂຄງລ່າງພື້ນຖານ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້;

10. **ບໍລິສັດໂຄງການ** ໝາຍເຖິງ ບໍລິສັດທີ່ໄດ້ຮັບການຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ແລະ ສ້າງຕັ້ງຂຶ້ນຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ເພື່ອຈັດຕັ້ງປະຕິບັດໂຄງການ ພາຍໃຕ້ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

11. **ເຈົ້າຂອງໂຄງການ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງ ແຂວງ, ນະຄອນຫຼວງ ທີ່ຮັບຜິດຊອບ ການກະກຽມ, ການປະມູນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ ແລະ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

12. **ທຶນສໍາລັບການກະກຽມໂຄງການ** ໝາຍເຖິງ ທຶນທີ່ຖືກຈັດສັນໄວ້ເພື່ອນໍາໃຊ້ເຂົ້າໃນການກະ ກຽມໂຄງການ ເລີ່ມແຕ່ຂັ້ນຕອນສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ຈົນເຖິງ ຂັ້ນຕອນ ສໍາເລັດການປະມູນໂຄງການ ແລະ ຕິດຕາມ ກວດກາໂຄງການ;

13. **ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ສັນຍາຜູກພັນ ລະຫວ່າງ ລັດຖະບານ, ຕາງໜ້າ ໂດຍຂະແໜງແຜນການ ແລະ ການລົງທຶນ ແລະ ບໍລິສັດ ໂຄງການ ໃນການພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

14. **ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ໂຄງການ ພັດທະນາ ແລະ/ຫຼື ການຄຸ້ມຄອງບໍລິຫານໂຄງການພື້ນຖານໂຄງລ່າງ ແລະ ການບໍລິການ ໃຫ້ແກ່ສັງຄົມໃນກໍານົດເວລາອັນແນ່ນອນ, ເປັນໂຄງການທີ່ນອນໃນແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຖືກຮັບຮອງໂດຍ ລັດຖະບານ, ຜ່ານຂັ້ນຕອນການປະມູນທີ່ໂປ່ງໃສ ແລະ ເປີດກວ້າງ;

15. **ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ** ໝາຍເຖິງ ບົດສະເໜີໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ສ້າງຂຶ້ນດ້ວຍຄ່າໃຊ້ຈ່າຍ ແລະ ຄວາມສ່ຽງຂອງພາກເອກະຊົນ ເພື່ອຂໍພັດທະນາ ເປັນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງກັບດໍາລັດສະບັບນີ້;

16. **ລັດວິສາຫະກິດ** ໝາຍເຖິງ ຫົວໜ່ວຍທຸລະກິດທີ່ຖືກສ້າງຕັ້ງຂຶ້ນ ແລະ ບໍລິຫານໂດຍລັດ ຫຼື ລັດຮ່ວມທຶນ ກັບ ຫົວໜ່ວຍວິສາຫະກິດອື່ນ ຊຶ່ງລັດຖະບານ ຖືຮຸ້ນຢ່າງໜ້ອຍ ຫ້າສິບເອັດ ສ່ວນຮ້ອຍ (51%) ຂອງຮຸ້ນທັງໝົດ

17. **ຄວາມຄຸ້ມຄ່າໃນການລົງທຶນ** ໝາຍເຖິງປະສິດທະພາບ ແລະ ປະສິດທິຜົນ ໃນການດໍາເນີນທຸລະກິດກໍຄືການລົງທຶນ ເຂົ້າໃນໂຄງການ;

18. **ແຜນງົບປະມານຊໍາລະໂຄງການ** ໝາຍເຖິງ ແຜນລາຍຈ່າຍທີ່ກໍານົດໄວ້ໃນແຜນງົບປະມານ ແລະ ໃນສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຊໍາລະໃຫ້ແກ່ ໂຄງການຕາມທີ່ໄດ້ເຊັນສັນຍາແລ້ວ ເປັນແຕ່ລະປີ ຈົນຄົບຖ້ວນຕາມກໍານົດເວລາຂອງສັນຍາ ໃນກໍລະນີຕ້ອງມີການສະໜັບສະໜູນຂອງລັດຖະບານ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ລັດ ຊຸກຍູ້, ສົ່ງເສີມພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຮ່ວມລົງທຶນກັບພາກລັດ ດ້ວຍການວາງນະໂຍບາຍ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂອໍານວຍຄວາມສະດວກ, ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການ ເພື່ອໃຫ້ສາມາດລົງທຶນຮ່ວມກັນ ໃນໂຄງການກໍ່ສ້າງໃໝ່, ປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການສາທາລະນະໃນຂະແໜງການ, ເງື່ອນໄຂ ແລະ ຂັ້ນຕອນ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

**ມາດຕາ 5 ຫຼັກການກ່ຽວກັບວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ວຽກງານລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໂດຍມີການແບ່ງຄວາມຮັບຜິດຊອບໃຫ້ຂະແໜງການກ່ຽວຂ້ອງຢ່າງຈະແຈ້ງ;

3. ເປີດເຜີຍຂໍ້ມູນກ່ຽວກັບ ການແຂ່ງຂັນ, ການປະມູນ, ມູນຄ່າ, ຜົນປະໂຫຍດ ແລະ ຄວາມສ່ຽງ ໃນການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ລວມທັງລະບຽບການ ທີ່ມີຜົນກະທົບໂດຍກົງຕໍ່ການລົງທຶນດັ່ງກ່າວ;

4. ຮັບປະກັນຜົນປະໂຫຍດສູງສຸດ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ບົນພື້ນຖານການສຶກສາຜົນກະທົບ, ຄວາມເປັນໄປໄດ້ ແລະ ຄວາມຄຸ້ມຄ່າຂອງການລົງທຶນ;

5. ຈັດແບ່ງຄວາມຮັບຜິດຊອບໃນການລົງທຶນຮ່ວມ ລະຫວ່າງ ເຈົ້າຂອງໂຄງການ ແລະ ບໍລິສັດໂຄງການໃຫ້ມີຄວາມເໝາະສົມ ລວມທັງຄວາມຮັບຜິດຊອບຕໍ່ ການຄຸ້ມຄອງ ແລະ ບໍລິຫານຄວາມສ່ຽງທີ່ອາດເກີດຂຶ້ນ;

6. ຮັບປະກັນການຄຸ້ມຄອງ, ບໍລິຫານການລົງທຶນຮ່ວມດ້ວຍຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

7. ສົ່ງເສີມການມີສ່ວນຮ່ວມຂອງບຸກຄົນທີ່ເປັນພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

8. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ແລະ ພາກເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນການຮ່ວມມືກັບຕ່າງປະເທດໃນຮູບແບບສອງຝ່າຍ ແລະ ຫຼາຍຝ່າຍ ໃນລະດັບພາກພື້ນ ແລະ ສາກົນ ກ່ຽວກັບວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ປະສົບປະການດ້ານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນຮູບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ສົນທິສັນຍາ ແລະ ສັນຍາ ສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II

## ຮູບການ, ຮູບແບບ ແລະ ລັກສະນະ ຂອງການລົງທຶນຮ່ວມ, ການກຳນົດ ຮູບແບບ ແລະ ອາຍຸສັນຍາ

**ມາດຕາ 8 ຮູບການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ສອງ ຮູບການ ດັ່ງນີ້:

1. ການລົງທຶນຮ່ວມໂດຍກົງຂອງລັດ;
2. ການລົງທຶນທັງໝົດຂອງເອກະຊົນ.

**ມາດຕາ 9 ການລົງທຶນຮ່ວມໂດຍກົງຂອງລັດ**

ການລົງທຶນຮ່ວມໂດຍກົງຂອງລັດ ແມ່ນ ການປະກອບທຶນສົມທົບຂອງລັດ ໂດຍກົງເຂົ້າໃນການພັດທະນາໂຄງການ ຮ່ວມກັບພາກເອກະຊົນ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ບົນພື້ນຖານການຕົກລົງເຫັນດີ ຂອງລັດຖະບານ ຫຼື ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

**ມາດຕາ 10 ການລົງທຶນທັງໝົດຂອງເອກະຊົນ**

ການລົງທຶນທັງໝົດຂອງເອກະຊົນ ແມ່ນ ພາກເອກະຊົນ ເປັນຜູ້ຮັບຜິດຊອບທັງໝົດແຫຼ່ງທຶນ ໃນການພັດທະນາໂຄງການ ແລະ ໄດ້ຮັບການສະໜັບສະໜູນ ດ້ານນະໂຍບາຍສົ່ງເສີມອື່ນ ໂດຍອີງຕາມຜົນຂອງການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ ບົນພື້ນຖານການຕົກລົງເຫັນດີ ຂອງລັດຖະບານ ແລະ ຫຼື/ການຮັບຮອງໂດຍສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

**ມາດຕາ 11 ຮູບແບບລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຮູບແບບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ (Design Build Finance Operate-DBFO);
2. ອອກແບບ, ກໍ່ສ້າງ ແລະ ດຳເນີນງານ (Design Build Operate-DBO);
3. ກໍ່ສ້າງ, ດຳເນີນງານ ແລະ ມອບໂອນ (Build Operate Transfer-BOT);
4. ກໍ່ສ້າງ, ເປັນເຈົ້າຂອງ, ດຳເນີນງານ ແລະ ໂອນ (Build Own Operate Transfer-BOOT);
5. ກໍ່ສ້າງ, ເປັນເຈົ້າຂອງ ແລະ ດຳເນີນງານ (Build Own Operate-BOO);
6. ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ (Build Transfer Operate-BTO);
7. ກໍ່ສ້າງ, ເຊົ່າ ແລະ ມອບໂອນ (Build Lease Transfer-BLT);
8. ກໍ່ສ້າງ ແລະ ມອບໂອນ (Build Transfer-BT).

**ມາດຕາ 12 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ, ສະໜອງທຶນ ແລະ ດຳເນີນງານ ແມ່ນ ການລົງທຶນທີ່ພາກເອກະຊົນ ເປັນຜູ້ຮັບຜິດຊອບໃນການອອກແບບ, ການກໍ່ສ້າງ, ການຈັດຫາແຫຼ່ງທຶນ, ດຳເນີນງານ ແລະ ບຳລຸງຮັກສາໂຄງການດ້ວຍຕົນເອງ ໂດຍມີສັນຍາ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ເປັນຕົ້ນ ການກໍ່ສ້າງ ຖະໜົນ, ສະໜາມບິນ, ທາງລົດໄຟ, ໂຄງການພັດທະນາ ພະລັງງານ, ອາຍແກສ - ນ້ຳມັນ, ບໍ່ແຮ່, ແຫຼ່ງທ່ອງທ່ຽວເຂດເສດຖະກິດພິເສດ ຊຶ່ງພາຍຫຼັງສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງມອບໂອນໂຄງການດັ່ງກ່າວ ທີ່ຢູ່ໃນສະພາບດີ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

**ມາດຕາ 13 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ອອກແບບ, ກໍ່ສ້າງ ແລະ ດໍາເນີນງານ ແມ່ນ ການລົງທຶນທີ່ພາກລັດເປັນເຈົ້າຂອງໂຄງການ ແລະ ເປັນຜູ້ຮັບຜິດຊອບສະໜອງແຫຼ່ງທຶນໃຫ້ແກ່ພາກເອກະຊົນໃນການອອກແບບ ແລະ ການກໍ່ສ້າງ ໂຄງລ່າງພື້ນຖານ ແລະ ການບໍລິການ ຂະໜາດກາງ ຊຶ່ງພາຍຫຼັງສໍາເລັດການກໍ່ສ້າງແລ້ວ ລັດເປັນຜູ້ວ່າຈ້າງພາກເອກະຊົນ ຄຸ້ມຄອງບໍລິຫານ ແລະ ບໍາລຸງຮັກສາໂຄງການດ້ວຍການເຮັດສັນຍາຮ່ວມກັນໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ພາຍຫຼັງສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງມອບໂອນໂຄງການດັ່ງກ່າວ ທີ່ຢູ່ໃນສະພາບດີຄືນ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

ສໍາລັບການຊໍາລະສະສາງ ໃຫ້ອີງໃສ່ຜົນຂອງການຈັດຕັ້ງປະຕິບັດໂຄງການຕົວຈິງ ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນສັນຍາ.

**ມາດຕາ 14 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ ແລະ ມອບໂອນ ແມ່ນ ການລົງທຶນທີ່ພາກລັດໃຫ້ສິດສໍາປະທານໂຄງການ ໃຫ້ແກ່ພາກເອກະຊົນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ພາກເອກະຊົນ ເປັນຜູ້ຮັບຜິດຊອບສະໜອງແຫຼ່ງທຶນໃນການກໍ່ສ້າງ ແລະ ດໍາເນີນໂຄງການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການ ສໍາລັບໂຄງການລົງທຶນຂະໜາດກາງ ແລະ ຂະໜາດໃຫຍ່ ຊຶ່ງພາຍຫຼັງສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງໂອນໂຄງການສໍາປະທານດັ່ງກ່າວ ທີ່ຢູ່ໃນສະພາບດີ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

**ມາດຕາ 15 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ, ດໍາເນີນງານ ແລະ ມອບໂອນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ດໍາເນີນງານ, ເປັນເຈົ້າຂອງ ແລະ ມອບໂອນ ແມ່ນ ການລົງທຶນທີ່ພາກລັດໃຫ້ສິດສໍາປະທານໂຄງການ ໃຫ້ແກ່ພາກເອກະຊົນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ພາກເອກະຊົນ ເປັນຜູ້ຮັບຜິດຊອບສະໜອງແຫຼ່ງທຶນໃນການກໍ່ສ້າງ, ພ້ອມທັງເປັນເຈົ້າຂອງ ແລະ ດໍາເນີນໂຄງການພັດທະນາໂຄງລ່າງພື້ນຖານ ແລະ ການບໍລິການ ຂະໜາດນ້ອຍ ແລະ ຂະໜາດກາງ ຊຶ່ງພາຍຫຼັງສິ້ນສຸດສັນຍາແລ້ວ ພາກເອກະຊົນ ຕ້ອງມອບໂອນໂຄງການສໍາປະທານດັ່ງກ່າວ ທີ່ຢູ່ໃນສະພາບດີ ໃຫ້ລັດຖະບານ ໂດຍບໍ່ຄິດໄລ່ມູນຄ່າຄືນ.

**ມາດຕາ 16 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເປັນເຈົ້າຂອງ ແລະ ດໍາເນີນງານ ແມ່ນ ການລົງທຶນຂອງພາກເອກະຊົນເອງ ໂດຍຜູ້ລົງທຶນເປັນຜູ້ດໍາເນີນໂຄງການດ້ວຍຕົນເອງ ສໍາລັບໂຄງລ່າງພື້ນຖານ, ຂະແໜງບໍລິການ ແລະ ໂຄງການລົງທຶນ ຂະໜາດກາງ ແລະ ຂະໜາດໃຫຍ່ ຊຶ່ງຈະໄດ້ຮັບນະໂຍບາຍດ້ານ ພາສີ, ອາກອນ ລວມທັງ ການສະໜັບສະໜູນ ທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 17 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ມອບໂອນ ແລະ ດຳເນີນງານ ແມ່ນ ການລົງທຶນທີ່ພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ ໂຄງລ່າງພື້ນຖານ ແລະ ການບໍລິການທຸກຂະໜາດ ດ້ວຍທຶນຂອງຕົນເອງ ແລ້ວມອບໂອນໂຄງການໃຫ້ພາກລັດ ພາຍຫຼັງສິ້ນສຸດການກໍ່ສ້າງ ແລະ ພາກລັດ ເປັນຜູ້ໃຫ້ພາກເອກະຊົນ ເຊົ່າສິ່ງກໍ່ສ້າງດັ່ງກ່າວ ດ້ວຍການເຮັດສັນຍາເຊົ່າຮ່ວມກັນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ.

**ມາດຕາ 18 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ, ເຊົ່າ ແລະ ມອບໂອນ ແມ່ນ ການລົງທຶນພາກເອກະຊົນ ເປັນຜູ້ອອກແບບ ແລະ ກໍ່ສ້າງ ໂຄງລ່າງພື້ນຖານ ແລະ ການບໍລິການ ທຸກຂະໜາດ ດ້ວຍທຶນຂອງຕົນເອງ ແລະ ພາຍຫຼັງສິ້ນສຸດການກໍ່ສ້າງແລ້ວ ພາກເອກະຊົນ ຕ້ອງມອບໂອນໂຄງການໃຫ້ພາກລັດ ແລະ ພາກລັດ ເປັນຜູ້ໃຫ້ພາກເອກະຊົນເຊົ່າ ດ້ວຍການເຮັດສັນຍາເຊົ່າຮ່ວມກັນ ໃນໄລຍະເວລາອັນແນ່ນອນໃດໜຶ່ງ.

**ມາດຕາ 19 ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ**

ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຮູບແບບ ກໍ່ສ້າງ ແລະ ມອບໂອນ ແມ່ນ ການລົງທຶນພາກລັດເປັນຜູ້ສະໜອງແຫຼ່ງທຶນ ໃນການອອກແບບ ແລະ ກໍ່ສ້າງ ໂດຍການວ່າຈ້າງພາກເອກະຊົນອອກແບບ ແລະ ກໍ່ສ້າງ ແລ້ວມອບໂອນໃຫ້ພາກລັດ ເປັນເຈົ້າຂອງໂຄງການ ແລະ ນຳໃຊ້ ຫຼື ດຳເນີນງານເລີຍ ພາຍຫຼັງສຳເລັດການກໍ່ສ້າງ ແລະ ພາກລັດກໍຕ້ອງຊຳລະເງິນໃຫ້ພາກເອກະຊົນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 20 ລັກສະນະ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ລັກສະນະຂອງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ສັນຍາ ລະຫວ່າງ ພາກລັດ ກັບ ພາກເອກະຊົນ ຊຶ່ງເປັນບໍລິສັດໂຄງການ;
2. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ;
3. ເປັນໂຄງການກໍ່ສ້າງໃໝ່ ຊຶ່ງແມ່ນການປັບປຸງໂຄງລ່າງພື້ນຖານ ຫຼື ສະໜອງການບໍລິການ ແກ່ສາທາລະນະ ບົນພື້ນຖານເນັ້ນໃສ່ຜົນໄດ້ຮັບ;
4. ຮັບຜິດຊອບຕໍ່ຄວາມສ່ຽງຂອງບໍລິສັດໂຄງການ ເປັນຕົ້ນ ຄວາມສ່ຽງດ້ານ ການກໍ່ສ້າງ, ຄວາມຕ້ອງການຂອງຕະຫຼາດ, ລາຍຮັບ ແລະ ພັນທະຂອງບໍລິສັດໂຄງການ ໃນການຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ຂອງການລົງທຶນ;
5. ຮັບປະກັນສິດຜົນປະໂຫຍດຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ;
6. ຜ່ານຂັ້ນຕອນການແຂ່ງຂັນ ແລະ ປະມູນ ແບບເປີດກວ້າງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
7. ໄດ້ຮັບການສະໜັບສະໜູນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ບົນພື້ນຖານການຕົກລົງ ຂອງລັດຖະບານ.

**ມາດຕາ 21 ການກຳນົດ ຮູບແບບ ແລະ ອາຍຸສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການກຳນົດເອົາ ຮູບແບບ ຕາມທີ່ໄດ້ກຳນົດໄວ້ ແຕ່ມາດຕາ 12 ຫາ 19 ຂອງດຳລັດສະບັບນີ້ ແລະ ການກຳນົດອາຍຸສັນຍາ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ອີງຕາມ ປະເພດ, ຂະໜາດ, ມູນຄ່າ, ເງື່ອນໄຂ, ລັກສະນະຈຸດພິເສດສະເພາະ ຂອງການລົງທຶນ ແລະ ຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ.

ສຳລັບ ອາຍຸສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ສູງສຸດບໍ່ໃຫ້ເກີນ ຫ້າສິບປີ ພ້ອມທັງໃຫ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

# ພາກທີ III
# ການກະກຽມ, ການພິຈາລະນາ ແລະ ການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

## ໝວດທີ 1
## ການກະກຽມ ແລະ ການພິຈາລະນາ

**ມາດຕາ 22 ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ບົດສະເໜີເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ເອກະສານສະເໜີແນວຄວາມຄິດເບື້ອງຕົ້ນ ຂອງເຈົ້າຂອງໂຄງການ ທີ່ມີຈຸດປະສົງພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງເປັນໂຄງການທີ່ຖືກບັນຈຸເຂົ້າໃນແຜນໂຄງການລົງທຶນຂອງລັດ.

ສຳລັບເນື້ອໃນລະອຽດຂອງບົດສະເໜີເບື້ອງຕົ້ນ ນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 23 ການສະເໜີ ແລະ ການພິຈາລະນາ ບົດສະເໜີເບື້ອງຕົ້ນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ເຈົ້າຂອງໂຄງການ ທີ່ມີຈຸດປະສົງພັດທະນາໂຄງການ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງນອນໃນແຜນການລົງທຶນຂອງລັດທີ່ໄດ້ຜ່ານການຮັບຮອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງແລ້ວ ໃຫ້ຍື່ນບົດສະເໜີເບື້ອງຕົ້ນ ຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ ພາຍໃນ ສິບຫ້າ ວັນລັດຖະການ ສຳລັບການລົງທຶນໃນກິດຈະການທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກຳນົດໃຫ້ຂັ້ນສູນການຄຸ້ມຄອງ.

ສຳລັບການລົງທຶນຮ່ວມ ໃນກິດຈະການທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງໄດ້ກຳນົດໃຫ້ຂັ້ນແຂວງຄຸ້ມຄອງ ໃຫ້ຍື່ນບົດສະເໜີເບື້ອງຕົ້ນ ຕໍ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ເພື່ອຄົ້ນຄວ້າ ແລະ ສັງລວມ ແລ້ວນຳສະເໜີ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ.

ໃນກໍລະນີໄດ້ຮັບການພິຈາລະນາຮັບຮອງຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລ້ວ ໃຫ້ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແຈ້ງເປັນລາຍລັກອັກສອນ ໃຫ້ຂະ ແໜງການທີ່ກ່ຽວຂ້ອງ ພາຍໃນ ຫ້າ ວັນລັດຖະການ ເພື່ອກະກຽມ

ສ້າງບົດສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ແບບລະອຽດຂອງໂຄງການ.

**ມາດຕາ 24 ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ບົດສະເໜີແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນເອກະສານຂອງໂຄງການທີ່ລິເລີ່ມໂດຍເຈົ້າຂອງໂຄງການ ຫຼື ພາກເອກະຊົນ ຊຶ່ງເປັນໂຄງການທີ່ບໍ່ຖືກບັນຈຸເຂົ້າໃນແຜນການລົງທຶນຂອງລັດ ເພື່ອສະເໜີລັດຖະບານ ຫຼື ສະພາແຫ່ງຊາດ ພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບເນື້ອໃນລະອຽດຂອງບົດສະເໜີແນວຄວາມຄິດລິເລີ່ມ ນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 ເງື່ອນໄຂ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງມີ ເງື່ອນໄຂດັ່ງນີ້:

1. ເປັນໂຄງການທີ່ສ້າງຂຶ້ນ ໂດຍແນວຄວາມຄິດລິເລີ່ມ ຂອງ ເຈົ້າຂອງໂຄງການ ຫຼື ພາກເອກະຊົນ ທີ່ກ່ຽວຂ້ອງ;
2. ເປັນໂຄງການທີ່ມີຄວາມຈຳເປັນ, ມີຄວາມຄຸ້ມຄ່າໃນການລົງທຶນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ;
3. ມີຜົນຕອບແທນສູງ ແລະ ກວ້າງຂວາງ ທາງດ້ານເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
4. ມີຂໍ້ມູນລະອຽດ ແລະ ພຽງພໍ ເພື່ອໃຫ້ສາມາດປະເມີນ ຫຼື ສືບຕໍ່ ສ້າງບົດວິພາກເສດຖະກິດ-ເຕັກນິກລະອຽດຂອງໂຄງການ.

ໃນກໍລະນີແນວຄວາມຄິດລິເລີ່ມໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນແນວຄວາມຄິດລິເລີ່ມຂອງພາກເອກະຊົນນັ້ນ ພາກເອກະຊົນທີ່ກ່ຽວຂ້ອງຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ທັງໝົດໂດຍບໍ່ຮຽກຮ້ອງການສະໜັບສະໜູນ ດ້ານການເງິນ ຫຼື ດ້ານນະໂຍບາຍດ້ານ ພາສີ, ອາກອນ ຈາກລັດຖະບານໃນການກະກຽມ ແລະ ດຳເນີນໂຄງການ ລວມທັງຮັບຜິດຊອບຄວາມສ່ຽງ ທັງໝົດ ຂອງໂຄງການ.

**ມາດຕາ 26 ການສະເໜີ ແລະ ການພິຈາລະນາ ແນວຄວາມຄິດລິເລີ່ມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ເຈົ້າຂອງໂຄງການ ຫຼື ພາກເອກະຊົນ ທີ່ມີຈຸດປະສົງພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງເປັນໂຄງການທີ່ມີແນວຄວາມຄິດລິເລີ່ມ ໃຫ້ຍື່ນບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເບື້ອງຕົ້ນ ຂອງໂຄງການ ຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ ພາຍໃນ ຫົກສິບຫ້າ ວັນລັດຖະການ ສຳລັບການລົງທຶນໃນກິດຈະການທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໄດ້ກຳນົດໃຫ້ຂັ້ນສູນການຄຸ້ມຄອງ.

ສຳລັບການລົງທຶນຮ່ວມ ໃນກິດຈະການທີ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໄດ້ກຳນົດໃຫ້ຂັ້ນແຂວງຄຸ້ມຄອງນັ້ນ ໃຫ້ຍື່ນບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເບື້ອງຕົ້ນ ຕໍ່ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ຄົ້ນຄວ້າ

ແລະ ສັງລວມ ແລ້ວນຳສະເໜີ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຫັນວ່າ ບົດວິພາກເສດຖະກິດ-ເຕັກນິກ ເບື້ອງຕົ້ນ ມີເນື້ອໃນຖືກຕ້ອງ ແລະ ຄົບຖ້ວນ ແລ້ວ ໃຫ້ກະຊວງແຜນການ ແລະ ການລົງທຶນ ນຳສະເໜີລັດຖະບານພິຈາລະນາ. ພາຍຫຼັງ ລັດຖະບານພິຈາລະນາຮັບຮອງແລ້ວ ໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແຈ້ງເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ເປັນລາຍລັກອັກສອນ ເພື່ອກະກຽມເອກະສານປະມູນໂຄງການ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄົ້ນຄວ້າແລ້ວ ຫາກເຫັນວ່າ ບົດວິພາກເສດຖະກິດ-ເຕັກນິກ ເບື້ອງຕົ້ນ ມີເນື້ອໃນບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ກໍໃຫ້ເລື່ອນການພິຈາລະນາອອກໄປ ໂດຍແຈ້ງເປັນລາຍລັກອັກສອນ ເພື່ອໃຫ້ ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ປັບປຸງ ແລະ ແກ້ໄຂ ພາຍໃນກຳນົດເວລາ ຫົກສິບ ວັນລັດຖະການ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ ແລະ  ພາຍຫຼັງທີ່ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ໄດ້ປັບປຸງ ແລະ ແກ້ໄຂສຳເລັດແລ້ວ ໃຫ້ຍື່ນ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານຫ້ອງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນພາຍໃນເວລາທີ່ໄດ້ກຳນົດໄວ້.

ເຈົ້າຂອງໂຄງການ ຫຼື ພາກເອກະຊົນ ທີ່ໄດ້ຍື່ນບົດວິພາກເສດຖະກິດ-ເຕັກນິກຂອງໂຄງການຕາມແນວຄວາມຄິດລິເລີ່ມ ນັ້ນ ຈະບໍ່ໄດ້ຮັບບູລິມະສິດ ໃນການເປັນຜູ້ພັດທະນາໂຄງການໂດຍກົງ, ແຕ່ຕ້ອງຜ່ານຂະບວນການປະມູນ ຕາມທີ່ໄດ້ກຳນົດ ໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ໃນກໍລະນີທີ່ໄດ້ຜ່ານຂະບວນການປະມູນແລ້ວ ແຕ່ບໍ່ໄດ້ຮັບຄັດເລືອກ ໃຫ້ເປັນຜູ້ພັດທະນາໂຄງການ, ເຈົ້າຂອງໂຄງການ ຫຼື ພາກເອກະຊົນນັ້ນ ຈະໄດ້ຮັບການພິຈາລະນາກ່ຽວກັບການໃຊ້ແທນຄືນ ຄ່າໃຊ້ຈ່າຍ ທີ່ໄດ້ສ້າງບົດວິພາກເສດຖະກິດ-ເຕັກນິກ ເບື້ອງຕົ້ນ ຂອງໂຄງການ ຈາກຜູ້ທີ່ໄດ້ຮັບການຄັດເລືອກໃຫ້ພັດທະນາໂຄງການ ໂດຍຄ່າໃຊ້ຈ່າຍດັ່ງກ່າວ ຕ້ອງຖືກຄິດໄລ່ເປັນຕົ້ນທຶນ ຂອງໂຄງການ ແລະ ກຳນົດແຈ້ງໃນ ເອກະສານປະມູນ.

ໃນກໍລະນີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄົ້ນຄວ້າແລ້ວ ເຫັນວ່າໂຄງການທີ່ມີແນວຄວາມຄິດລິເລີ່ມ ນັ້ນ ບໍ່ສອດຄ່ອງກັບລັກສະນະຂອງການລົງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ຂອງດຳລັດສະບັບນີ້ ໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແຈ້ງຕອບເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ກ່ຽວກັບການບໍ່ເຫັນດີໃຫ້ລົງທຶນ ພາຍໃນ ຫົກສິບຫ້າ ວັນ ລັດຖະການ ນັບແຕ່ວັນ ໄດ້ຮັບບົດວິພາກທາງດ້ານເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ເບື້ອງຕົ້ນ ເປັນຕົ້ນໄປ.

### ມາດຕາ 27 ບົດວິພາກເສດຖະກິດ-ເຕັກນິກ ຂອງ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ເອກະສານກ່ຽວກັບ ຮູບແບບ, ລັກສະນະ ແລະ ອາຍຸ ຂອງໂຄງການລົງທຶນ ທີ່ສະແດງໃຫ້ເຫັນຄວາມສອດຄ່ອງດ້ານເຕັກນິກ, ຜົນປະໂຫຍດດ້ານເສດຖະກິດ-ສັງຄົມ, ຄວາມຄຸ້ມຄ່າໃນການລົງທຶນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຄວາມເປັນໄປໄດ້ດ້ານການເງິນ, ຮັບປະກັນລັກສະນະຂອງການລົງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 20 ຂອງດຳລັດສະບັບນີ້ ລວມທັງການກຳນົດກ່ຽວກັບ ຄວາມຍືນຍົງຂອງໂຄງການ, ຜົນກະທົບສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ, ບົດບາດ ຍິງ-ຊາຍ ໃນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ສໍາລັບເນື້ອໃນລະອຽດຂອງບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການໄດ້ກໍານົດໄວ້ໃນລະບຽບການສະເພາະ ຂອງຂະແໜງການກ່ຽວຂ້ອງ.

ພາຍຫຼັງສໍາເລັດການສ້າງບົດສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ເຕັກນິກ ຂອງໂຄງການ, ພາຍໃນ ສິບຫ້າ ວັນລັດຖະການ ເຈົ້າຂອງໂຄງການ ຕ້ອງນໍາສະເໜີບົດສຶກສາດັ່ງກ່າວ ໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເອົາເຂົ້າກອງປະຊຸມ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອພິຈາລະນາ ແລະ ຮັບຮອງ ຕາມລະບຽບການ.

**ມາດຕາ 28 ການສະເໜີ ແລະ ການພິຈາລະນາ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນຜູ້ຄົ້ນຄວ້າບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ ຂອງໂຄງການ ແລ້ວນໍາສະເໜີ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ຕົກລົງໃນດ້ານຫຼັກການ ກ່ຽວກັບການຮັບຮອງບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ພ້ອມທັງອະນຸຍາດໃຫ້ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງປະກອບເອກະສານປະມູນ;

2. ເລື່ອນການພິຈາລະນາ ກ່ຽວກັບການຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ໃນກໍລະນີ ເຫັນວ່າ ຍັງບໍ່ສາມາດຮັບຮອງໄດ້ ແລ້ວສະເໜີໃຫ້ ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ໃຫ້ຄວາມກະຈ່າງແຈ້ງ ແລະ/ຫຼື ປັບປຸງ ແລະ ແກ້ໄຂ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ;

3. ປະຕິເສດ ການຮັບຮອງເອົາບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ, ໃນກໍລະນີໂຄງການ ບໍ່ສາມາດລົງທຶນ ໃນຮູບແບບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ໃນກໍລະນີ ທີ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຮັບຮອງບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງມີທຶນປະກອບສ່ວນຂອງລັດແຕ່ ສາມສິບ ສ່ວນຮ້ອຍ (30%) ຂອງທຶນທັງໝົດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ແລະ ໜ້ອຍກວ່າ ສາມສິບ ສ່ວນຮ້ອຍ (30%) ຂອງທຶນທັງໝົດ ໃຫ້ປະຕິບັດຕາມການຕົກລົງ ຂອງລັດຖະບານ.

ສໍາລັບກໍລະນີ ທີ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕົກລົງເລື່ອນການພິຈາລະນາ ໃຫ້ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ຊີ້ແຈງ ແລະ/ຫຼື ປັບປຸງ ແລະ ແກ້ໄຂ ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ພາຍໃນ ຫົກສິບວັນ ວັນລັດຖະການ ແລະ ພາຍຫຼັງປັບປຸງ ແລະ ແກ້ໄຂສໍາເລັດແລ້ວ ໃຫ້ຍື່ນ ຕໍ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

## ໝວດທີ 2
## ການປະມູນໂຄງການ

**ມາດຕາ 29 ການປະມູນໂຄງການ**

ການປະມູນໂຄງການ ແມ່ນ ການແຂ່ງຂັນທາງດ້ານລາຄາ ແລະ ຄຸນະພາບ ໃນການພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຄັດເລືອກຄູ່ສັນຍາພາກເອກະຊົນ ທີ່ມີຄວາມໂປ່ງໃສ ແລະ ຍຸຕິທໍາ ຊຶ່ງຕ້ອງໄດ້ດໍາເນີນການປະມູນ ຢູ່ ກະຊວງ ແຜນການ ແລະ ການລົງທຶນ ໂດຍສອດຄ່ອງກັບດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງແຈ້ງກ່ຽວກັບການເປີດການປະມູນໂຄງການ ໂດຍຜ່ານສື່ຕ່າງໆ ພາຍໃນ ຫ້າ ວັນລັດຖະການ ພາຍຫຼັງທີ່ລັດຖະບານ ຫຼື ສະພາແຫ່ງຊາດພິຈາລະນາຮັບຮອງເອົາບົດສະເໜີເບື້ອງຕົ້ນຂອງໂຄງການ ແລະ ພາຍຫຼັງທີ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາຮັບຮອງບົດວິພາກເສດຖະກິດ-ເຕັກນິກ ສໍາລັບແນວຄວາມຄິດລິເລີ່ມ ໂຄງການ.

ສໍາລັບການປະມູນໂຄງການທີ່ໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ໃຫ້ປະຕິບັດຕາມກົດໝາຍແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ຍົກເວັ້ນກໍລະນີຜູ້ໃຫ້ທຶນ ໄດ້ກໍານົດລະບຽບການ ແລະ ຂັ້ນຕອນດໍາເນີນການປະມູນໄວ້ຕ່າງຫາກ ແຕ່ເຈົ້າຂອງໂຄງການ ຕ້ອງແຈ້ງໃຫ້ຫ້ອງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ຊາບ.

### ມາດຕາ 30 ຫຼັກການ ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ;
2. ເປີດກວ້າງແຂ່ງຂັນການປະມູນ, ສະເໝີພາບ, ໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້;
3. ຫຼີກເວັ້ນການສ້າງຂໍ້ຈໍາກັດ ທີ່ເປັນອຸປະສັກ, ຂັດຂວາງ ແລະ ລະເມີດສິດຂອງຜູ້ເຂົ້າຮ່ວມການປະມູນ.

### ມາດຕາ 31 ເອກະສານການປະມູນ

ເອກະສານການປະມູນ ແມ່ນ ບັນດາເອກະສານທາງການ ທີ່ກໍານົດກ່ຽວກັບຂໍ້ມູນ ທີ່ຈໍາເປັນກ່ຽວກັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອໃຫ້ຜູ້ປະມູນ ແລະ ຜູ້ເຂົ້າຮ່ວມການຄັດເລືອກໃຊ້ເປັນບ່ອນອີງ ໃນການຕັດສິນໃຈດ້ວຍຕົນເອງ ໃນການເຂົ້າຮ່ວມການປະມູນ.

ເອກະສານການປະມູນ ມີ ດັ່ງນີ້:

- ແຜນລະອຽດຂອງຂະບວນການປະມູນທີ່ຕ້ອງປະຕິບັດ;
- ເອກະສານກ່ຽວກັບ ຄຸນນະວຸດທິເບື້ອງຕົ້ນ ແລະ ມາດຕະຖານເງື່ອນໄຂ ຂອງຜູ້ເຂົ້າຮ່ວມການປະມູນຕາມແບບພິມທີ່ກໍານົດໃຫ້;
- ໜັງສືແຈ້ງເຈດຈໍານົງ ຂອງຜູ້ເຂົ້າຮ່ວມການປະມູນ;
- ຮ່າງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
- ບົດວິພາກເສດຖະກິດ-ເຕັກນິກ;
- ເອກະສານກ່ຽວກັບການສະໜັບສະໜູນຂອງລັດຖະບານ (ຖ້າມີ);
- ເອກະສານຄັດຕິດທາງດ້ານເຕັກນິກທີ່ກ່ຽວຂ້ອງ.

ສໍາລັບລາຍລະອຽດຂອງເອກະສານການປະມູນ ໃຫ້ປະຕິບັດຕາມເອກະສານຄັດຕິດ ຂອງດໍາລັດສະບັບນີ້.

ເຈົ້າຂອງໂຄງການ ແລະ ພາກເອກະຊົນ ຕ້ອງປະສານສົມທົບກັບຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກກເອກະຊົນ ເພື່ອກະກຽມເອກະສານການປະມູນ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃຫ້ສໍາເລັດ ພາຍໃນ ສາມສິບ ວັນລັດຖະການ ນັບແຕ່ວັນໄດ້ອອກແຈ້ງການກ່ຽວກັບການປະມູນເປັນຕົ້ນໄປ.

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງກວດກາເອກະສານການປະມູນໃຫ້ສຳເລັດ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານການປະມູນ ເປັນຕົ້ນໄປ. ໃນກໍລະນີເອກະສານການປະມູນຫາກບໍ່ຄົບຖ້ວນ ແລະ ຖືກຕ້ອງ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງແຈ້ງໃຫ້ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ປັບປຸງເອກະສານການປະມູນຄືນ ພາຍໃນ ຫ້າ ວັນລັດຖະການ.

### ມາດຕາ 32 ຂັ້ນຕອນການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ການປະມູນ ໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ປະຕິບັດ ຕາມຂັ້ນຕອນຕົ້ນຕໍ ດັ່ງນີ້:

1. ຄັດເລືອກຄຸນວຸດທິຂອງຜູ້ເຂົ້າຮ່ວມປະມູນ;
2. ຄັດເລືອກມາດຕະຖານ-ເຕັກນິກ;
3. ເປີດການແຂ່ງຂັນດ້ານລາຄາ ໂດຍສອດຄ່ອງກັບແຜນລະອຽດຂອງຂະບວນການປະມູນ ໃນເອກະສານຊ້ອນທ້າຍຂອງດຳລັດສະບັບນີ້.

ລາຍລະອຽດກ່ຽວກັບ ການຄັດເລືອກ ວຸດທິຂອງຜູ້ເຂົ້າຮ່ວມການປະມູນ, ມາດຕະຖານ-ເຕັກນິກ ແລະ ການເປີດການແຂ່ງຂັນດ້ານລາຄາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 33 ຄະນະກຳມະການປະມູນ

ຄະນະກຳມະການປະມູນ ໄດ້ຮັບການແຕ່ງຕັ້ງ ໂດຍ ລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ບົນພື້ນຖານການປະສານສົມທົບ ພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ທີ່ກ່ຽວຂ້ອງ, ມີພາລະບົດບາດເປັນເສນາທິການໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການປະມູນ ຕາມວິທີການ ແລະ ຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະກຳມະການປະມູນ ປະກອບດ້ວຍ ຜູ້ຕາງໜ້າຈາກ:

- ກະຊວງການເງິນ ໜຶ່ງ ທ່ານ;
- ເຈົ້າຂອງໂຄງການ ໜຶ່ງ ຫາ ສາມ ທ່ານ;
- ທີ່ປຶກສາອາວຸໂສທາງດ້ານເຕັກນິກ-ວິຊາການ ທີ່ກ່ຽວຂ້ອງ ໜຶ່ງ ຫາ ສາມ ທ່ານ;
- ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໜຶ່ງ ທ່ານ.

ໃນກໍລະນີຈຳເປັນ ກໍສາມາດສະເໜີແຕ່ງຕັ້ງຜູ້ຕາງໜ້າຈາກ ພາກສ່ວນ ແລະ ອົງການປົກຄອງທ້ອງຖິ່ນຂັ້ນແຂວງທີ່ກ່ຽວຂ້ອງ.

### ມາດຕາ 34 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປະມູນ

ຄະນະກຳມະການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດຄວາມຕ້ອງການ ແລະ ເງື່ອນໄຂ ຂອງການປະມູນ, ກວດກາເອກະສານການປະມູນ ແລ້ວນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
2. ດຳເນີນການປະມູນ, ເປີດຊອງເອກະສານການປະມູນ ແລະ ປະເມີນເອກະສານການປະມູນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ລາຍງານຜົນຂອງການປະເມີນເອກະສານການປະມູນ ແລະ ຜົນການປະມູນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການປະເມີນເອກະສານການປະມູນ ໃຫ້ດຳເນີນໂດຍອີງໃສ່ເງື່ອນໄຂທາງດ້ານ ການເງິນ, ເສດຖະກິດ-ເຕັກນິກ, ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ລວມທັງບົດບາດ ຍິງ-ຊາຍ.

# ພາກທີ IV
# ສັນຍາ ແລະ ເນື້ອໃນຂອງສັນຍາ, ການພິຈາລະນາ ແລະ ການເຊັນ ສັນຍາ, ການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາ

## ໝວດທີ 1
## ສັນຍາ ແລະ ເນື້ອໃນຂອງສັນຍາ

### ມາດຕາ 35 ສັນຍາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ສັນຍາຮ່ວມລົງທຶນ ທີ່ເຊັນກັນ ລະຫວ່າງ ກະຊວງ ແຜນການ ແລະ ການລົງທຶນ ຕາງໜ້າໃຫ້ລັດຖະບານ ແຫ່ງ ສປປ ລາວ ກັບ ພາກເອກະຊົນ ທີ່ມີຈຸດປະສົງລົງທຶນຮ່ວມ ແລະ ຜ່ານການຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ຊຶ່ງຕາງໜ້າໂດຍບໍລິສັດໂຄງການ ທີ່ໄດ້ຮັບອະນຸຍາດລົງທຶນ ເພື່ອໃຫ້ເກີດສິດ ແລະ ພັນທະ ໃນການພັດທະນາໂຄງການໃດໜຶ່ງ ພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ເງື່ອນໄຂສະເພາະຕາມສັນຍາ.

ທຸກໂຄງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ຕ້ອງເຮັດສັນຍາ ທີ່ກຳນົດເງື່ອນໄຂຢ່າງຈະແຈ້ງ ແລະ ມີກຳນົດເວລາທີ່ແນ່ນອນ.

### ມາດຕາ 36 ເນື້ອໃນຂອງສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງກຳນົດເນື້ອໃນຊັດເຈນ, ຈະແຈ້ງ ແລະ ຮັດກຸມ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ເນື້ອໃນພື້ນຖານ ຂອງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີດັ່ງນີ້:

- ຂອບເຂດ ແລະ ໜ້າວຽກຂອງໂຄງການ;
- ຄວາມຮັບຜິດຊອບຂອງຄູ່ສັນຍາແຕ່ລະຝ່າຍ ຊຶ່ງປະກອບດ້ວຍ ລັດຖະບານ, ເຈົ້າຂອງໂຄງການ ແລະ ພາກເອກະຊົນ;
- ຄວາມຮັບຜິດຊອບຕໍ່ຄວາມສ່ຽງຂອງໂຄງການ ຂອງຄູ່ສັນຍາແຕ່ລະຝ່າຍ;
- ການປະຕິບັດພັນທະດ້ານພາສີ, ອາກອນ ຂອງ ພາກເອກະຊົນ;
- ສິດ ນຳໃຊ້ທີ່ດິນ, ເຂົ້າໄປໃນພື້ນທີ່ໂຄງການ ແລະ ນຳໃຊ້ສິ່ງອຳນວຍຄວາມສະດວກຕ່າງໆ ໃນພື້ນທີ່ໂຄງການ;
- ໄລຍະເວລາກໍ່ສ້າງ, ວັນເລີ່ມດຳເນີນງານ, ດຳເນີນທຸລະກິດ ແລະ ບຳລຸງຮັກສາ;
- ມາດຕະຖານໃນການປະຕິບັດງານດ້ານ ເຕັກນິກ, ຄຸນນະພາບ ແລະ ຄວາມປອດໄພ;

- ການເງິນ, ການຄໍ້າປະກັນ, ການສໍາລະຊະສາງ ແລະ ມາດຕະການປັບໃໝ ໃນກໍລະນີ ທີ່ບໍລິສັດໂຄງການ ບໍ່ສາມາດປະຕິບັດ ຕາມມາດຕະຖານ ທີ່ໄດ້ຕົກລົງກັນໄວ້ໃນສັນຍາ;
- ການທົບທວນ ແລະ ດັດແກ້ຫຼືຫຼຸດລາຄາ;
- ສິດແຊກແຊງເຂົ້າໃນໂຄງການຂອງ ລັດຖະບານ ແລະ ຜູ້ສະໜອງທຶນ ໃນກໍລະນີໂຄງການ ມີບັນຫາ;
- ການທົບທວນຄືນ, ການປັບປຸງ ຫຼື ປ່ຽນແປງເນື້ອໃນສັນຍາ;
- ການປ່ຽນແປງເງື່ອນໄຂຂອງຂອບເຂດ ແລະ ໜ້າວຽກ ລວມທັງການປັບປຸງເຕັກໂນໂລຊີ ທີ່ນໍາໃຊ້ໃນການພັດທະນາໂຄງການ;
- ການຕິດຕາມກວດກາ ແລະ ການລາຍງານ;
- ການວາງແຜນຄ່າໃຊ້ຈ່າຍບັງເອີນ;
- ການແກ້ໄຂຂໍ້ຂັດແຍ່ງ;
- ອາຍຸສັນຍາ ແລະ ການຄຸ້ມຄອງການປະຕິບັດສັນຍາ;
- ການຄຸ້ມຄອງໂຄງການ.

ນອກຈາກເນື້ອໃນພື້ນຖານທີ່ໄດ້ກໍານົດໄວ້ເທິງນີ້ ຄູ່ສັນຍາ ສາມາດຕົກລົງກັນກ່ຽວກັບເນື້ອໃນ ສະເພາະໃດໜຶ່ງຕື່ມອີກກໍໄດ້ ແຕ່ຕ້ອງສອດຄ່ອງກັບ ດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງບົນພື້ນຖານການຕົກລົງເຫັນດີຂອງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ລັດຖະບານ ຕາມແຕ່ກໍລະນີ.

## ໝວດທີ 2
## ການພິຈາລະນາ ແລະ ການເຊັນ ສັນຍາ

### ມາດຕາ 37 ຂັ້ນຕອນການພິຈາລະນາສັນຍາ

ການພິຈາລະນາສັນຍາ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ປະສານສົມທົບ ກັບເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ເພື່ອເຈລະຈາ ແລະ ປຶກສາຫາລືກ່ຽວກັບເນື້ອໃນຮ່າງສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງໃຫ້ສໍາເລັດ ພາຍໃນກໍານົດ ສາມສິບ ວັນລັດຖະການ ນັບແຕ່ ວັນທີ່ໄດ້ແຈ້ງຜົນການປະມູນ ເປັນຕົ້ນໄປ;

2. ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ນໍາສະເໜີຮ່າງສັນຍາ ພ້ອມດ້ວຍລາຍລະອຽດຂອງໂຄງການ ຕໍ່ກອງປະຊຸມ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ.

ໃນກໍລະນີຈໍາເປັນຕ້ອງປັບປຸງເນື້ອໃນຮ່າງສັນຍາ ໃຫ້ ເຈົ້າຂອງໂຄງການ ຫຼື ພາກເອກະຊົນທີ່ກ່ຽວຂ້ອງ ທົບທວນ ແລະ ປັບປຸງ ໃຫ້ສໍາເລັດ ພາຍໃນໄລຍະເວລາທີ່ ເໝາະສົມ ແລ້ວນໍາສະເໜີຕໍ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

ສໍາລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ມີການສະເໜີຂໍຍົກເວັ້ນ ການປະຕິບັດຂໍ້ກໍານົດ, ບົດບັນຍັດໃດໜຶ່ງ ຂອງກົດໝາຍ ທີ່ກ່ຽວຂ້ອງ ໃຫ້ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນຜູ້ນໍາສະເໜີລັດຖະບານ ແລະ ສະພາແຫ່ງຊາດພິຈາລະນາ.

**ມາດຕາ 38 ຂັ້ນຕອນການເຊັນສັນຍາ**

ການເຊັນສັນຍາ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ກະຊວງ ແຜນການ ແລະ ການລົງທຶນ ລາຍງານລັດຖະບານ ເພື່ອຂໍອະນຸມັດເຊັນສັນຍາ;

2. ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແຈ້ງເປັນລາຍລັກອັກສອນ ໃຫ້ເຈົ້າຂອງໂຄງການ ແລະ ພາກເອກະຊົນ ທີ່ໄດ້ຜ່ານການຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ ວັນລັດຖະບານອະນຸມັດໃຫ້ເຊັນສັນຍາ;

3. ພາກເອກະຊົນທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ສະເໜີຂໍອະນຸຍາດສ້າງຕັ້ງ ບໍລິສັດໂຄງການ ຕໍ່ ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນສູນກາງ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ;

4. ກະຊວງ ແຜນການ ແລະ ການລົງທຶນ ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ ເຊັນສັນຍາ ກັບ ພາກເອກະຊົນ ທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ຊຶ່ງຕາງໜ້າໂດຍ ບໍລິສັດໂຄງການ ພາຍໃນ ສາມ ສິບ ວັນລັດຖະການ ນັບແຕ່ວັນທີ່ບໍລິສັດໂຄງການໄດ້ຮັບໃບອະນຸຍາດລົງທຶນ ເປັນຕົ້ນໄປ.

ໃນກໍລະນີພາກເອກະຊົນທີ່ກ່ຽວຂ້ອງ ບໍ່ມາເຊັນສັນຍາຕາມ ກຳນົດເວລາ ທີ່ໄດ້ກຳນົດໄວ້ເທິງນີ້ ຈະຖືວ່າເປັນການສະລະສິດ ໂດຍບໍ່ມີສິດຮຽກຮ້ອງໃດໆ ຈາກລັດຖະບານ.

## ໝວດທີ 3
## ການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາ

**ມາດຕາ 39 ການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ການປ່ຽນແປງ ຫຼື ດັດແກ້ ສັນຍາການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ການປ່ຽນແປງເນື້ອໃນສັນຍາການລົງທຶນຮ່ວມ ທີ່ໄດ້ເຊັນກັນ ບົນພື້ນຖານການຕົກລົງເຫັນດີ ຂອງຄູ່ສັນຍາ ໂດຍສອດຄ່ອງກັບດຳລັດ ສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ໃນກໍລະນີການປ່ຽນແປງ ຫຼື ດັດແກ້ ເນື້ອໃນຂອງສັນຍາ ທີ່ມີຜົນກະທົບຕໍ່ປະສິດທິພາບ ແລະ ປະສິດທິຜົນ ຂອງໂຄງການ, ຄວາມຮັບຜິດຊອບຕໍ່ຄວາມສ່ຽງຂອງແຕ່ລະຝ່າຍ ຫຼື ມີຜົນກະທົບໂດຍກົງ, ທາງອ້ອມ ຕໍ່ງົບປະມານ, ການຊຳລະ, ການຄ້ຳປະກັນ ຫຼື ຕໍ່ຄວາມຮັບຜິດຊອບອື່ນທີ່ກ່ຽວຂ້ອງ ຂອງລັດຖະບານ ໃຫ້ຄູ່ສັນຍາສະເໜີຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີລັດຖະບານ ພິຈາລະນາໂດຍຜ່ານຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ສ່ວນກໍລະນີການປ່ຽນແປງ ຫຼື ດັດແກ້ ເນື້ອໃນສັນຍາ ທີ່ບໍ່ມີຜົນກະທົບຕາມທີ່ໄດ້ກຳນົດໄວ້ນັ້ນ ໃຫ້ຄູ່ສັນຍາສະເໜີຕໍ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອພິຈາລະນາ.

## ພາກທີ V
## ການຈັດຕັ້ງຮັບຜິດຊອບ ແລະ ການຈັດຕັ້ງປະຕິບັດ ໂຄງການລົງທຶນຮ່ວມ

## ໝວດທີ 1
## ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ແລະ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

**ມາດຕາ 40 ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ຄະນະກຳມະການດຽວກັນກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເຮັດໜ້າທີ່ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊ່ວຍລັດຖະບານ ໃນການຊີ້ນຳ ການຄົ້ນຄວ້າ, ຮ່າງນະໂຍບາຍ, ຍຸດທະສາດ ແລະ ນິຕິກຳ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຊີ້ນຳການຫັນເອົາ ນະໂຍບາຍ, ແຜນການ, ມະຕິຕົກລົງຂອງລັດຖະບານ ມາເປັນ ແຜນງານ, ແຜນການ ແລະ ໂຄງການລະອຽດ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ລວມທັງແຜນງົບປະມານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. ຊີ້ນຳການຈັດຕັ້ງປະຕິບັດວຽກງານຫ້ອງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ;

4. ພິຈາລະນາ ແລະ ຮັບຮອງ ຂອບເຂດ ແລະ ໜ້າວຽກ ສຳລັບການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ພິຈາລະນາ ຕົກລົງເຫັນດີ, ມີຄຳເຫັນ ຫຼື ປະຕິເສດ ການພັດທະນາໂຄງການ ໃນຮູບແບບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍອີງຕາມບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຂອງໂຄງການ;

6. ພິຈາລະນາ ຄົ້ນຄວ້າ ແລະ ມີຄຳເຫັນຕໍ່ການສະເໜີຂໍລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມແນວຄວາມຄິດລິເລີ່ມໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

7. ພິຈາລະນາ ຮັບຮອງ ຫຼື ມີຄຳເຫັນຕໍ່ ຮ່າງສັນຍາວ່າດ້ວຍການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

8. ຊີ້ນຳ ແລະ ຕິດຕາມ ກວດກາ ການປະເມີນຜົນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

9. ພິຈາລະນາ ແລະ ຮັບຮອງເອົາການວ່າຈ້າງຊ່ຽວຊານ ແລະ ທີ່ປຶກສາ ຕາມການສະເໜີ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍສອດຄ່ອງ ກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ຫ້ອງການປະຈຳການຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງແມ່ນຫ້ອງການດຽວກັນກັບຫ້ອງການບໍລິການ ການລົງທຶນປະຕູດຽວ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະກຳມະການດັ່ງກ່າວ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ລວມທັງຄົ້ນຄວ້າ,ສ້າງຮ່າງສັນຍາມາດຕະຖານ, ລະບົບຄຸ້ມຄອງ ຂໍ້ມູນ ແລະ ເວັບໄຊ໌ ຂອງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ເປັນສູນລວມການບໍລິການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ ເຈົ້າຂອງໂຄງການ, ບໍລິສັດໂຄງການ ແລະ ຜູ້ລົງທຶນ ໃຫ້ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ທັນການ;

3. ເປັນເຈົ້າການ ແລະ ເປັນໃຈກາງໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ປະສານສົມທົບກັບຂະແໜງການກ່ຽວຂ້ອງໃນການຄັດເລືອກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເບື້ອງຕົ້ນ ເພື່ອຈັດເຂົ້າໃນແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລ້ວນຳສະເໜີ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ ໃນເດືອນ ມີນາ ຂອງທຸກປີ;

5. ນຳສະເໜີ ບົດວິພາກເສດຖະກິດ-ເຕັກນິກຂອງໂຄງການ ແລະ ມີຄຳເຫັນດ້ານວິຊາການ ກ່ຽວກັບບົດສະເໜີເບື້ອງຕົ້ນ, ແນວຄວາມຄິດລິເລີ່ມ ແລະ ການປະມູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

6. ຄົ້ນຄວ້າ, ສ້າງ ຮ່າງລະບຽບການກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທຶນສຳລັບການກະກຽມໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ການຄັດເລືອກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

7. ສະເໜີລັດຖະບານ ພິຈາລະນາອະນຸມັດ ແລະ ມອບສິດໃນການເຊັນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

8. ຮ່າງໃບອະນຸຍາດສ້າງຕັ້ງບໍລິສັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຂໍອະນຸມັດລາຍເຊັນ ລວມທັງ ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ;

9. ຄຸ້ມຄອງ ແລະ ບໍລິຫານການນໍາໃຊ້ທຶນ ສໍາລັບການກະກຽມໂຄງການ, ບັນດາຊ່ຽວຊານ ແລະ ທີ່ປຶກສາ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການກະກຽມໂຄງການ, ການປະມູນ ແລະ ການສ້າງຄວາມສາມາດທີ່ກ່ຽວຂ້ອງ;

10. ຄຸ້ມຄອງ ແລະ ເກັບຄືນ ທຶນສໍາລັບກະກຽມໂຄງການ ໂດຍການເປີດບັນຊີສະເພາະ ຢູ່ ຄັງເງິນແຫ່ງຊາດ;

11. ລາຍງານຜົນຂອງການປະມູນຕໍ່ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາ ກ່ຽວກັບການປະກາດຜົນການປະມູນ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນຕໍ່ ກະຊວງແຜນການ ແລະ ການລົງທຶນ, ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢ່າງເປັນປົກກະຕິ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ

### ມາດຕາ 44 ຜູ້ຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ຜູ້ຈັດຕັ້ງຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ປະກອບດ້ວຍ ເຈົ້າຂອງໂຄງການ ແລະ ພາກເອກະຊົນ.

### ມາດຕາ 45 ສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ

ໃນການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຈົ້າຂອງໂຄງການມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດ ແລະ ສ້າງ ແຜນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເບື້ອງຕົ້ນ ໃຫ້ສໍາເລັດ ກ່ອນວັນທີ 25 ເດືອນມິຖຸນາ ຂອງ ທຸກປີ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ແລ້ວສົ່ງໄປຍັງຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອຄົ້ນຄວ້າ ແລະ ສະເໜີຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພິຈາລະນາບັນຈຸເຂົ້າໃນແຜນ ຫ້າ ປີ ແລະ ແຜນປະຈໍາປີ ຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ສະເໜີຂໍການສະໜັບສະໜູນ ທາງດ້ານ ວິຊາການ, ການເງິນ ແລະ/ຫຼື ທຶນສໍາລັບການກະກຽມໂຄງການ ຈາກລັດຖະບານ ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ ພ້ອມທັງສະໜອງແຜນຄາດຄະເນລາຍຈ່າຍໃນການກະກຽມໂຄງການ ໃຫ້ແກ່ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍຫຼັງທີ່ໄດ້ຮັບການເຫັນດີດ້ານຫຼັກການຈາກຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. ປະສານສົມທົບກັບ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນການກະກຽມ ແລະ ດໍາເນີນການປະມູນໂຄງການ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ວ່າຈ້າງ ບໍລິສັດທີ່ປຶກສາ ເພື່ອສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ສະເໜີກະຊວງ ແຜນການ ແລະ ການລົງທຶນ ແຕ່ງຕັ້ງ ຄະນະກຳມະການປະມູນ ໂຄງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໂດຍແມ່ນ ຮອງຫົວໜ້າກົມ ຫຼື ທຽບເທົ່າ ຂຶ້ນໄປ ເປັນຫົວໜ້າຄະນະ ສຳລັບກະຊວງ ແລະ ອົງການລັດທຽບເທົ່າກະຊວງ, ຫົວໜ້າພະແນກການ ຫຼື ທຽບເທົ່າ ຂຶ້ນໄປ ເປັນຫົວໜ້າຄະນະ ສຳລັບ ແຂວງ, ນະຄອນຫຼວງ;

7. ສ້າງລະບົບ ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ສັນຍາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ເຊັນແລ້ວ ໃຫ້ມີປະສິດທິພາບ ແລະ ສອດຄ່ອງກັບຂອບໜ້າວຽກທີ່ຖືກຮັບຮອງແລ້ວ;

8. ເປັນເຈົ້າການໃນການຕິດຕາມ ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານ ຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

9. ສະເໜີໂຈະ ຫຼື ຍົກເລີກ ການຈັດຕັ້ງປະຕິບັດການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ລັດຖະບານ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນກໍລະນີມີການລະເມີດ ສັນຍາ ແລະ ມີການເຄື່ອນໄຫວທີ່ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

10. ນຳສະເໜີ ແຜນງົບປະມານຊຳລະໂຄງການ ຕາມແຕ່ລະຮູບແບບຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ຊຶ່ງຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນກໍລະນີ ມີການສະໜັບສະໜູນທາງດ້ານການເງິນ ຈາກລັດຖະບານ ຊຶ່ງແຜນງົບປະມານດັ່ງກ່າວຕ້ອງປະກອບດ້ວຍ:

- ຕາຕະລາງການຊຳລະເງິນໂດຍກົງ, ການຄໍ້າປະກັນ ຫຼື ພັນທະດ້ານ ການເງິນ, ພາສີ, ອາກອນ ຂອງເຈົ້າຂອງໂຄງການ ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດ ສັນຍາໂຄງການ;
- ແຜນລາຍຈ່າຍປະຈຳປີ ຂອງເຈົ້າຂອງໂຄງການ ສຳລັບແຜນງົບປະມານການຊຳລະໂດຍກົງ, ການຄໍ້າປະກັນ ຫຼື ພັນທະທາງດ້ານການເງິນ, ພາສີ, ອາກອນ ຂອງເຈົ້າຂອງໂຄງການ ຕາມລຳດັບບູລິມະສິດເພື່ອນຳສະເໜີ ລັດຖະບານ ພິຈາລະນາ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 46 ສິດ ແລະ ພັນທະ ຂອງພາກເອກະຊົນ**

ໃນການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາກເອກະຊົນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີແນວຄວາມຄິດລິເລີ່ມໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ເຂົ້າຮ່ວມຂະບວນການປະມູນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ສ້າງຕັ້ງ ບໍລິສັດໂຄງການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 38 ຂອງດຳລັດສະບັບນີ້ ພາຍຫຼັງທີ່ໄດ້ຮັບຄັດເລືອກໃຫ້ເປັນຜູ້ພັດທະນາໂຄງການ ແລະ ໄດ້ຮັບແຈ້ງການເຫັນດີກ່ຽວກັບການເຊັນສັນຍາ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;

3. ເປີດບັນຊີຢູ່ທະນາຄານທຸລະກິດ ໃດໜຶ່ງ ທີ່ຕັ້ງຢູ່ ສປປ ລາວ, ນຳເຂົ້າທຶນ, ໂອນລາຍໄດ້, ກຳໄລ ແລະ ເງິນປັນຜົນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ປະກອບທຶນເຂົ້າໃນການພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນ ເອກະສານການປະມູນ ແລະ ສັນຍາ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ຈັດຕັ້ງປະຕິບັດ ແລະ ຄຸ້ມຄອງບໍລິຫານ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນ ເອກະສານການປະມູນ ແລະ ສັນຍາ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

6. ສ້າງລະບົບ ແລະ ກົນໄກທີ່ງ່າຍດາຍ ແລະ ມີປະສິດທິພາບ ເພື່ອຕິດຕາມ ແລະ ແກ້ໄຂຄຳຮ້ອງ, ຄຳສະເໜີ ຂອງຜູ້ຊົມໃຊ້ໂຄງລ່າງພື້ນຖານ ແລະ ການບໍລິການ;

7. ເປັນເຈົ້າການ ຕິດຕາມ, ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ປະຈຳ ສາມເດືອນ, ຫົກ ເດືອນ ແລະ ໜຶ່ງ ປີ;

8. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ, ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ນັບແຕ່ຂັ້ນຕອນການປະມູນ ຈົນຮອດ ໄລຍະສິ້ນສຸດ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

9. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ນອກຈາກ ສິດ ແລະ ພັນທະ ທີ່ໄດ້ກຳນົດໄວ້ເທິງນີ້ ພາກເອກະຊົນຍັງມີສິດ ແລະ ພັນທະສະເພາະ ຕາມທີ່ຕົກລົງກັນໄວ້ໃນສັນຍາ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

## ໝວດທີ 3
## ການສະໜັບສະໜູນຂອງລັດຖະບານ

### ມາດຕາ 47 ການສະໜັບສະໜູນຂອງລັດຖະບານ

ລັດຖະບານສະໜັບສະໜູນ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການສະໜັບສະໜູນ ດ້ານນິຕິກຳ;
2. ການສະໜັບສະໜູນ ດ້ານການເງິນ;
3. ການສະໜັບສະໜູນ ດ້ານນະໂຍບາຍສົ່ງເສີມ.

**ມາດຕາ 48 ການສະໜັບສະໜູນດ້ານນິຕິກຳ**

ການສະໜັບສະໜູນດ້ານນິຕິກຳ ແມ່ນ ການຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ໂດຍມີການປັບປຸງ ຫຼື ສ້າງນິຕິກຳຕາມແຕ່ກໍລະນີ ທີ່ເຫັນວ່າມີຄວາມຈຳເປັນ ໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີປະສິດທິພາບ.

ການປັບປຸງ ຫຼື ການສ້າງນິຕິກຳດັ່ງກ່າວ ຕ້ອງບໍ່ຂັດກັບນິຕິກຳອື່ນທີ່ມີແລ້ວ, ພ້ອມທັງຮັບປະກັນ ການປະຕິບັດສິດ ແລະ ພັນທະຂອງຜູ້ລົງທຶນຮ່ວມ ແລະ ນຳຜົນປະໂຫຍດ ມາສູ່ສັງຄົມ.

**ມາດຕາ 49 ການສະໜັບສະໜູນດ້ານການເງິນ**

ການສະໜັບສະໜູນດ້ານການເງິນ ແມ່ນ ການອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂ ໃຫ້ຜູ້ລົງທຶນຮ່ວມສາມາດເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ, ສະໜອງງົບປະມານເຂົ້າໃນກອງທຶນພັດທະນາໂຄງການລົງທຶນຮ່ວມ ລວມທັງການສະໜັບສະໜູນດ້ານການເງິນໃນການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ, ການປະມູນໂຄງການ ເພື່ອໃຫ້ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີຄວາມຍືນຍົງ.

ລັດຖະບານ ເປັນຜູ້ພິຈາລະນາຕົກລົງກ່ຽວກັບການໃຫ້ການສະໜັບສະໜູນດ້ານການເງິນ ແກ່ຜູ້ລົງທຶນຮ່ວມ ບົນພື້ນຖານການສະເໜີຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍອີງຕາມປະສິດທິຜົນຂອງໂຄງການລົງທຶນຮ່ວມຕໍ່ການພັດທະນາເສດຖະກິດ-ສັງຄົມ, ຄວາມຈຳເປັນທີ່ຕ້ອງໄດ້ມີການສະໜັບສະໜູນດ້ານການເງິນ ເພື່ອໃຫ້ເກີດຜົນປະໂຫຍດແກ່ສັງຄົມ.

**ມາດຕາ 50 ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ**

ການສະໜັບສະໜູນດ້ານນະໂຍບາຍສົ່ງເສີມ ແມ່ນ ການກຳນົດຂອບເຂດດ້ານນະໂຍບາຍການຫຼຸດຜ່ອນ ຫຼື ຍົກເວັ້ນ ພາສີ, ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ລວມທັງ ການຄ້ຳປະກັນ ແລະ ການຮັບປະກັນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ລັດຖະບານເປັນຜູ້ພິຈາລະນາ ກ່ຽວກັບການໃຫ້ນະໂຍບາຍສົ່ງເສີມ ສຳລັບແຕ່ລະໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍອີງຕາມຜົນຂອງການສຶກສາ-ສຳຫຼວດ ເບື້ອງຕົ້ນ, ບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການ.

**ມາດຕາ 51 ການສົ່ງເສີມ ວິສາຫະກິດ, ຜະລິດຕະພັນ ແລະ ການບໍລິການພາຍໃນ**

ວິສາຫະກິດ ທີ່ສ້າງຕັ້ງ ແລະ ຈົດທະບຽນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ ຊຶ່ງບໍ່ແມ່ນສາຂາ ຂອງວິສາຫະກິດຕ່າງປະເທດ ມີຄວາມເທົ່າທຽມ ກັບວິສາຫະກິດຕ່າງປະເທດ ແລະ ສາມາດເຂົ້າຮ່ວມການປະມູນໂຄງການ.

ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງສົ່ງເສີມການນຳໃຊ້ ຜະລິດຕະພັນ ແລະ ການບໍລິການ ທີ່ສາມາດສະໜອງຢູ່ພາຍໃນປະເທດ ບົນພື້ນຖານຜະລິດຕະພັນ ແລະ ການບໍລິການດັ່ງກ່າວ ຕ້ອງມີຄຸນນະພາບໃກ້ຄຽງ ຫຼື ທຽບເທົ່າກັບ ຜະລິດຕະພັນທີ່ນຳເຂົ້າຈາກຕ່າງປະເທດ.

ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ນຳໃຊ້ທຶນພາຍໃນທັງໝົດ ໃຫ້ສົ່ງເສີມວິສາຫະກິດພາຍໃນ ທີ່ມີເງື່ອນໄຂ.

# ໝວດທີ 4
# ການຮັບປະກັນ ແລະ ການຄ້ຳປະກັນ

**ມາດຕາ 52 ການຮັບປະກັນ**

ຊັບສິນບັດ, ທຶນ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ຢູ່ ສປປ ລາວ ຈະບໍ່ຖືກ ເກັບເກນ, ຍຶດ ຫຼື ໂອນ ເປັນຂອງລັດ ດ້ວຍວິທີການທາງບໍລິຫານ ເວັ້ນເສຍແຕ່ມີຄວາມຈຳເປັນ ເພື່ອສາທາລະນະປະໂຫຍດ ໂດຍມີການທົດແທນຄືນ ຕາມມູນຄ່າຕົວຈິງທີ່ໄດ້ລົງທຶນ, ຕາມລາຄາຕະຫຼາດ ໃນເວລາມອບໂອນ ແລະ ຕາມວິທີການຊຳລະທີ່ໄດ້ຕົກລົງກັນ ຫຼື ກຳນົດໄວ້ໃນສັນຍາການລົງທຶນຮ່ວມ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ.

ລັດຖະບານ ຈະບໍ່ຍົກເລີກສັນຍາການລົງທຶນຮ່ວມກ່ອນກຳນົດ ເວັ້ນເສຍແຕ່ຜູ້ລົງທຶນລະເມີດສັນຍາ ຫຼື ຖືກສານປະຊາຊົນທີ່ມີສິດອຳນາດຂອງ ສປປ ລາວ ລົງຄຳຕັດສິນ ຫຼື ພິພາກສາ ຊຶ່ງຄຳຕັດສິນ ຫຼື ຄຳພິພາກສາໃຊ້ໄດ້ຢ່າງເດັດຂາດແລ້ວ. ໃນກໍລະນີພາກເອກະຊົນ ຫາກເປັນຜູ້ກະທຳຜິດ ຫຼື ລະເມີດສັນຍາການລົງທຶນຮ່ວມນັ້ນ ຈະບໍ່ໄດ້ຮັບການຊົດເຊີຍຈາກລັດຖະບານ.

**ມາດຕາ 53 ການຄ້ຳປະກັນ**

ບໍລິສັດໂຄງການ ສາມາດນຳເອົາ ຊັບສິນ, ສິດຕາມສັນຍາ ແລະ ຜົນປະໂຫຍດ ຂອງຕົນ ໃນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄປເປັນຫຼັກຊັບຄ້ຳປະກັນການກູ້ຢືມເງິນ ເພື່ອມາພັດທະນາໂຄງການ ດັ່ງກ່າວ ໂດຍສອດຄ່ອງ ກັບເງື່ອນໄຂທີ່ຕົກລົງກັນໄວ້ໃນສັນຍາການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ບົນພື້ນຖານການຕົກລົງເຫັນດີ ຂອງ ລັດຖະບານ.

ຫຼັກຊັບຄ້ຳປະກັນການກູ້ຢືມເງິນ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ມີ ດັ່ງນີ້ :

1. ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ເປັນຊັບສິນຂອງ ບໍລິສັດໂຄງການ ຫຼື ໝາກຜົນຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
2. ລາຍຮັບທີ່ຈະເກີດຂຶ້ນໃນອານາຄົດ ແລະ ລາຍຮັບຂອງ ບໍລິສັດໂຄງການ ທີ່ຈະໄດ້ຮັບຈາກໂຄງການ ລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;
3. ຫຼັກຊັບຄ້ຳປະກັນອື່ນ ເປັນຕົ້ນ ຫຸ້ນ, ບັນຊີເງິນຝາກ.

**ມາດຕາ 54 ການຮັກສາຄວາມລັບ**

ເຈົ້າຂອງໂຄງການ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງຮັກສາຄວາມລັບ ແລະ ບໍ່ເປີດເຜີຍເນື້ອໃນ ຂອງເອກະສານການປະມູນ, ໜັງສືສະແດງຄວາມສົນໃຈ, ບົດສະເໜີເຂົ້າຮ່ວມການປະມູນ, ຈົດໝາຍພົວພັນ, ການປະເມີນ, ການປຶກສາຫາລື ຫຼື ການເຈລະຈາ ແກ່ຜູ້ສົນໃຈປະມູນ ແລະ ຜູ້ເຂົ້າຮ່ວມການປະມູນ ຍົກເວັ້ນຈົດໝາຍ ທີ່ໃຊ້ຕອບຄຳຖາມ ແລະ ປະກອບຄຳເຫັນສຳລັບເອກະສານການປະມູນ ຊຶ່ງເນື້ອໃນຂອງຈົດໝາຍດັ່ງກ່າວ ສາມາດເປີດເຜີຍໄດ້ ໃນກໍລະນີປະຕິບັດຕາມກົດໝາຍ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ.

## ໝວດທີ 5
## ການຕິດຕາມ ກວດກາ ແລະ ການປະເມີນຜົນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

### ມາດຕາ 55 ຄວາມຮັບຜິດຊອບລວມໃນການ ຕິດຕາມ ກວດກາ ແລະ ການປະເມີນຜົນ ໂຄງການ

ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງໝົດ ມີຄວາມຮັບຜິດຊອບໃນການ ຕິດຕາມ ກວດກາ ແລະ ປະເມີນຜົນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນຕົ້ນ ການກະກຽມ, ການປະມູນ, ການນຳໃຊ້ທຶນ ຂອງໂຄງການ, ການຈັດຕັ້ງປະຕິບັດສັນຍາ ໃນແຕ່ລະໄລຍະ ເຊັ່ນ ໄລຍະ ກໍ່ສ້າງ, ດຳເນີນງານ, ບຳລຸງຮັກສາ ແລະ ການມອບຮັບໂຄງການ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອໃຫ້ການຈັດຕັ້ງປະຕິບັດ ສັນຍາ ແລະ ໂຄງການລົງທຶນຮ່ວມລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ໄດ້ຮັບຜົນສຳເລັດ.

ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ນັ້ນ ຕ້ອງສ້າງກົນໄກ ຕິດຕາມ ກວດກາ ແລະ ປະເມີນຜົນ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດເປົ້າໝາຍ ແລະ ລະດັບຄາດໝາຍ ຂອງໂຄງການ.

### ມາດຕາ 56 ຄວາມຮັບຜິດຊອບຂອງ ຫ້ອງການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:

1. ເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງໃນການຕິດຕາມ ກວດກາ ຜົນສຳເລັດຂອງການ ຈັດຕັ້ງປະຕິບັດຕົວຊີ້ວັດ ຕາມມາດຕະຖານ ແລະ ເງື່ອນໄຂ ເພື່ອບັນລຸເປົ້າໝາຍຂອງໂຄງການ ທີ່ໄດ້ຕົກລົງກັນໄວ້ໃນ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ປະສານສົມທົບກັບ ເຈົ້າຂອງໂຄງການ ແລະ ຜູ້ກວດກາເອກະລາດ ໃນການທົບທວນຄືນ ກ່ຽວກັບການກວດກາ ແລະ ການຮັບປະກັນຄຸນນະພາບ;

3. ປະສານສົມທົບ ກັບ ບໍລິສັດໂຄງການ ແລະ ເຈົ້າຂອງໂຄງການ ໃນການຕິດຕາມ ກວດກາ ແລະ ປະເມີນຜົນ ໂຄງການຢ່າງມີປະສິດທິພາບ ແລະ ເປັນປົກກະຕິ;

4. ລາຍງານສະພາບ ແລະ ຄວາມຄືບໜ້າ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ພວມຈັດຕັ້ງປະຕິບັດ ແລະ ອາດເກີດຂຶ້ນໃນອະນາຄົດໃຫ້ແກ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນປະຈຳສາມເດືອນ ແລະ ປະຈຳປີ;

5. ລາຍງານຄວາມຄືບໜ້າ ຂອງການຈັດຕັ້ງປະຕິບັດສັນຍາ ແລະ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ບັນດາຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ພົວພັນກັບ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຮັບຊາບ ເປັນແຕ່ລະໄລຍະ.

ນອກຈາກຄວາມຮັບຜິດຊອບ ຕົ້ນຕໍ ຕາມທີ່ໄດ້ກຳນົດໄວ້ເທິງນີ້ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຍັງມີຄວາມຮັບຜິດຊອບໃນການປະສານສົມທົບ ກັບເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອດຳເນີນການຕິດຕາມ ກວດກາ ແລະ ປະເມີນຜົນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນແຕ່ລະໄລຍະ ດັ່ງນີ້:

- ໄລຍະກຳນົດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເຂົ້າໃນແຜນ ພາຍໃຕ້ການຊີ້ນຳຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງຕ້ອງຮັບປະກັນ ການຄັດເລືອກໂຄງການ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງຊາດ ໃນແຕ່ລະໄລຍະ;

- ໄລຍະກະກຽມການປະມູນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງຕ້ອງທົບທວນຄືນ ແລະ ກວດກາຄຸນນະພາບ ຂອງເອກະສານການປະມູນ ທີ່ເຈົ້າຂອງໂຄງການເປັນຜູ້ກະກຽມກ່ອນການປະກາດສູ່ສັງຄົມ ໂດຍຜ່ານສື່ມວນຊົນ;

- ໄລຍະຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງຕ້ອງກວດກາການຈັດຕັ້ງປະຕິບັດໂຄງການຂອງເຈົ້າຂອງໂຄງການ ຮັບປະກັນວ່າໜ້າວຽກທັງໝົດ ທີ່ຖືກຈັດຕັ້ງປະຕິບັດ ໂດຍເຈົ້າຂອງໂຄງການ ແລະ ບໍລິສັດໂຄງການ ຢູ່ໃນກຳນົດເວລາ ແລະ ສອດຄ່ອງກັບມາດຕະຖານທີ່ກຳນົດໄວ້ໃນສັນຍາ;

- ໄລຍະການມອບໂອນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງຕ້ອງປະສານສົມທົບກັບເຈົ້າຂອງໂຄງການ ແລະ ຂະແໜງການກ່ຽວຂ້ອງ ກວດກາໂຄງການ ກ່ອນການມອບໂອນຕາມມາດຕະຖານ ແລະ ຄຸນນະພາບທີ່ໄດ້ຕົກລົງກັນໄວ້ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 57 ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ມີຄວາມຮັບຜິດຊອບໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອດຳເນີນການ ຕິດຕາມ ກວດກາ ແລະ ປະເມີນຜົນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນແຕ່ລະໄລຍະ ດັ່ງນີ້:

- ໄລຍະການປະມູນໂຄງການ ແລະ ການເຮັດສັນຍາ ຊຶ່ງຕ້ອງດຳເນີນການກວດກາການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ໃຫ້ຈັດຕັ້ງປະຕິບັດໂຄງການຕາມແຜນ ແລະ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

- ໃນໄລຍະຈັດຕັ້ງປະຕິບັດໂຄງການ ຊຶ່ງຕ້ອງຕິດຕາມ ກວດກາ, ປະເມີນຜົນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ຜົນຂອງການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍຜ່ານຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

- ໃນໄລຍະຈັດຕັ້ງປະຕິບັດສັນຍາ ຊຶ່ງຕ້ອງດຳເນີນການຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດພັນທະ ໂດຍອີງໃສ່ ເປົ້າໝາຍ, ລະດັບຄາດໝາຍ, ມາດຕະຖານ ແລະ ຄຸນນະພາບ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

ໃນແຕ່ລະໄລຍະ ໃຫ້ລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາ ຊຶ່ງຕ້ອງໄດ້ລາຍງານ ຢ່າງເປັນປົກກະຕິ ເຊັ່ນ ໄລຍະ ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໂດຍຜ່ານຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 58 ຄວາມຮັບຜິດຊອບຂອງບໍລິສັດໂຄງການ**

ບໍລິສັດໂຄງການ ມີຄວາມຮັບຜິດຊອບໃນການ ຕິດຕາມ ກວດກາ, ປະເມີນ, ສະຫຼຸບ ແລະ ລາຍງານຄວາມຄືບໜ້າ ແລະ ຜົນຂອງການຈັດຕັ້ງປະຕິບັດໂຄງການ ແລະ ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢ່າງເປັນປົກກະຕິ ຊຶ່ງຕ້ອງລາຍງານ ເປັນໄລຍະ ໜຶ່ງເດືອນ, ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ ຕໍ່ ເຈົ້າຂອງໂຄງການ, ຂະແໜງການ ການເງິນ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

## ພາກທີ VI
## ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

**ມາດຕາ 59 ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ**

ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອນໍາໃຊ້ເຂົ້າໃນການສະໜັບສະໜູນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

**ມາດຕາ 60 ແຫຼ່ງກອງທຶນ**

ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອທາງການເພື່ອການພັດທະນາ, ການຊ່ວຍເຫຼືອຂອງອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມທັງການປະກອບສ່ວນຂອງພາກທຸລະກິດ;
3. ເງິນທີ່ພາກເອກະຊົນ ໃຊ້ແທນຄືນ ໃນກໍລະນີທີ່ໄດ້ຮັບການສະໜັບສະໜູນດ້ານການເງິນພາຍຫຼັງທີ່ສໍາເລັດການປະມູນໂຄງການ;
4. ດອກເບ້ຍ ແລະ ຜົນກໍາໄລ ທີ່ເກີດຂຶ້ນຈາກການລົງທຶນ ໂດຍນໍາໃຊ້ກອງທຶນພັດທະນາໂຄງການ;
5. ຄ່າປັບໃໝ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 61 ເປົ້າໝາຍການນໍາໃຊ້ກອງທຶນ**

ເປົ້າໝາຍການນໍາໃຊ້ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີດັ່ງນີ້:

- ການສຶກສາ-ສໍາຫຼວດ ເບື້ອງຕົ້ນ ຂອງໂຄງການລົງທຶນຮ່ວມ;
- ການສ້າງບົດວິພາກເສດຖະກິດ-ເຕັກນິກ ແລະ ບົດປະເມີນຜົນກະທົບທາງດ້ານສິ່ງແວດລ້ອມ ສັງຄົມ ແລະ ທໍາມະຊາດ;
- ການປະມູນໂຄງການລົງທຶນຮ່ວມ;
- ການວ່າຈ້າງທີ່ປຶກສາ ແລະ ການຕິດຕາມ ກວດກາ ການຈັດຕັ້ງປະຕິບັດໂຄງການ.

ການຄຸ້ມຄອງ ແລະ ການນໍາໃຊ້ ກອງທຶນພັດທະນາໂຄງການລົງທຶນຮ່ວມ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 62 ການບັນຊີ ແລະ ງົບປະມານ**

ກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີລະບົບບັນຊີ ແລະ ສາລະບານງົບປະມານ ໂດຍຜ່ານການຮັບຮອງຈາກ ກະຊວງການເງິນ ເພື່ອຄຸ້ມຄອງລາຍຮັບ-ລາຍຈ່າຍ.

ລາຍຮັບ-ລາຍຈ່າຍ ງົບປະມານທັງໝົດຂອງກອງທຶນ ຕ້ອງລວມສູນເປັນເອກະພາບ ໂດຍຜ່ານຕົວເລກ ກັບລະບົບບັນຊີຂອງຄັງເງິນແຫ່ງຊາດ ພາຍໃຕ້ການກວດກາຂອງກະຊວງການເງິນ ແລະ ໃຫ້ເປີດບັນຊີຮັບ ແລະ ບັນຊີຈ່າຍ ຢູ່ຄັງເງິນແຫ່ງຊາດ ຫຼື ທະນາຄານ ທີ່ຕັ້ງຢູ່ ສປປ ລາວ ໂດຍຜ່ານການເຫັນດີຂອງ ກະຊວງການເງິນ.

ປີງົບປະມານ ແລະ ການສະຫຼຸບ ລາຍງານ ຂອງກອງທຶນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

### ມາດຕາ 63 ການຄຸ້ມຄອງບໍລິຫານກອງທຶນ

ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນຜູ້ຄຸ້ມຄອງບໍລິຫານກອງທຶນພັດທະນາໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍມີຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນເສນາທິການ ໃນການຄຸ້ມຄອງບໍລິຫານກອງທຶນ ເພື່ອໃຫ້ກອງທຶນເຕີບໃຫຍ່ຂະຫຍາຍຕົວ, ມີຄວາມເຂັ້ມແຂງ ແລະ ຍືນຍົງ.

## ພາກທີ VII
## ຂໍ້ຫ້າມ

### ມາດຕາ 64 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

2. ພົວພັນ, ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ແກ່ຜູ້ເຂົ້າຮ່ວມການປະມູນ, ເປັນ ສື່ກາງ ຫຼື ນາຍໜ້າ, ໃຫ້ສິນບົນ ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ປອມແປງເອກະສານ ຫຼື ຕາປະທັບ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ຂັດຂວາງ, ແຊກແຊງ ການປະຕິບັດໜ້າທີ່ ຂອງພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ເປັນທີ່ປຶກສາໃນການກະກຽມ, ການອອກແບບ ຫຼື ການກໍານົດມາດຕະຖານ-ເຕັກນິກ ຂອງສິນຄ້າ ແລະ ການບໍລິການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 65 ຂໍ້ຫ້າມ ສໍາລັບເຈົ້າຂອງໂຄງການ

ຫ້າມ ເຈົ້າຂອງໂຄງການ ມີພຶດຕິກໍາ ດັ່ງນີ້:

1. ຕົກລົງຮັບຮອງເອົາ ບົດສະເໜີ ເບື້ອງຕົ້ນ ແລະ ແນວຄວາມຄິດລິເລີ່ມ ສໍາລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍບໍ່ຜ່ານຂັ້ນຕອນການພິຈາລະນາຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ປິດບັງ, ກົດໜ່ວງ, ຖ່ວງດຶງ ແລະ ຊຸກເຊື່ອງ ເອກະສານ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. ກົດໜ່ວງ, ແກ່ຍາວ ຂັ້ນຕອນ ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບ ສິນບົນ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ລວມທັງ ແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

5. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ, ສົມຮູ້ຮ່ວມຄິດ ກ່ຽວກັບການປະມູນໂຄງການ ແລະ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

6. ເປີດ ຫຼື ນຳໃຊ້ ບັນຊີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

7. ອວ່າຍທຶນ ຈາກໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃດໜຶ່ງ ທີ່ຖືກຮັບຮອງແລ້ວ ໄປໃສ່ການລົງທຶນ ຕາມບົດສະເໜີ ເບື້ອງຕົ້ນ ແລະ ແນວຄວາມຄິດລິເລີ່ມ ສຳລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ອື່ນ ທີ່ໄດ້ຮັບການສະໜັບສະໜູນດ້ານການເງິນ;

8. ປ່ຽນແປງໂຄງສ້າງ ແລະ/ຫຼື ເພີ່ມບໍລິມາດວຽກ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ຖືກຮັບຮອງແລ້ວ ໂດຍບໍ່ໄດ້ຮັບການເຫັນດີຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ລັດຖະບານ;

9. ອະນຸຍາດໃຫ້ ທີ່ປຶກສາ ແລະ ຜູ້ຮັບເໝົາໂຄງການ, ດັດແກ້ມາດຕະຖານ-ເຕັກນິກ ຂອງໂຄງການ ໂດຍບໍ່ໄດ້ຮັບການເຫັນດີຈາກ ພາກສ່ວນທີ່ກ່ຽວຂ້ອງ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫຼື ລັດຖະບານ;

10. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 66 ຂໍ້ຫ້າມ ສຳລັບ ຄະນະກຳມະການປະມູນ**

ຫ້າມ ຄະນະກຳມະການປະມູນ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ, ບັງຄັບ, ນາບຂູ່ ຜູ້ເຂົ້າຮ່ວມປະມູນ ເພື່ອຫາຜົນປະໂຫຍດສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

2. ສໍ້ລາດບັງຫຼວງ, ສໍ້ໂກງ, ຕົວະຍົວະ, ຫຼອກລວງ ແລະ ສົມຮູ້ຮ່ວມຄິດ ໃນການປະມູນ ລວມທັງ ຂໍເອົາ, ທວງເອົາ, ໃຫ້ ຫຼື ຮັບ ສິນບົນ;

3. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ເມີນເສີຍ ຕໍ່ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຕົນ ແລະ ປະຕິບັດໜ້າທີ່ເກີນຂອບເຂດ;

5. ປິດບັງ, ກົດໜ່ວງ, ຖ່ວງດຶງ ແລະ ຊຸກເຊື່ອງ ເອກະສານ ກ່ຽວກັບການປະມູນ ລວມທັງ ກົດໜ່ວງ ຫຼື ແກ່ຍາວການປະມູນ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 67 ຂໍ້ຫ້າມ ສຳລັບ ທີ່ປຶກສາໂຄງການ**

ຫ້າມ ທີ່ປຶກສາໂຄງການ ມີພຶດຕິກຳ ດັ່ງນີ້:

1. ໃຫ້ຄຳປຶກສາໂດຍບໍ່ມີຄວາມຮັບຜິດຊອບ, ບໍ່ຖືກຕ້ອງຕາມຄວາມຈິງ, ຫຼົບຫຼີກການໃຫ້ຄຳປຶກສາ ຫຼື ຄຳແນະນຳທາງດ້ານວິຊາການທີ່ດີ ກ່ຽວກັບໂຄງການ ໃຫ້ແກ່ ເຈົ້າຂອງໂຄງການ ພາກລັດ ແລະ ພາກເອກະຊົນ;

2. ສະໜອງຂໍ້ມູນທາງດ້ານການເງິນ, ມາດຕະຖານ-ເຕັກນິກ ຂອງໂຄງການ ບໍ່ຖືກຕ້ອງກັບຄວາມເປັນຈິງ;

3. ເມີນເສີຍ ຕໍ່ການປະຕິບັດໜ້າທີ່ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ດັດແກ້ມາດຕະຖານ-ເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງໂຄງການ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ລັດຖະບານ;

5. ສົມຮູ້ຮ່ວມຄິດກັບ ເຈົ້າຂອງໂຄງການ, ຄະນະຮັບຜິດຊອບການປະມູນ ຫຼື ພາກເອກະຊົນ ເພື່ອ ຫາຜົນປະໂຫຍດສ່ວນຕົວ, ໝູ່ເພື່ອນ, ຄອບຄົວ ແລະ ຍາດພີ່ນ້ອງ;

6. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບຂອງໂຄງການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ມີສ່ວນກ່ຽວຂ້ອງໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 68 ຂໍ້ຫ້າມ ສຳລັບ ພາກເອກະຊົນ, ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ໄດ້ຮັບຄັດເລືອກ**

ຫ້າມ ພາກເອກະຊົນ ຜູ້ເຂົ້າຮ່ວມປະມູນ ແລະ ຜູ້ໄດ້ຮັບຄັດເລືອກ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່, ໃຫ້ສິນບົນແກ່ ເຈົ້າໜ້າທີ່, ພະນັກງານ ແລະ ທີ່ປຶກສາໂຄງການ ທີ່ຮັບຜິດຊອບໂດຍກົງ ຫຼື ກ່ຽວຂ້ອງກັບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໂດຍກົງ ຫຼື ທາງອ້ອມ;

2. ເມີນເສີຍຕໍ່ການຄຸ້ມຄອງການປະຕິບັດໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ດັດແກ້ມາດຕະຖານ-ເຕັກນິກ, ເພີ່ມ ຫຼື ຫຼຸດ ບໍລິມາດວຽກຂອງໂຄງການ ໂດຍບໍ່ໄດ້ຮັບ ອະນຸຍາດ ຈາກເຈົ້າຂອງໂຄງການ ແລະ ການເຫັນດີຈາກ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຫຼື ລັດຖະບານ;

4. ຫຼົບຫຼີກ ການປະຕິບັດພັນທະພາສີ, ອາກອນ, ປິດບັງລາຍໄດ້, ຜົນກຳໄລ ລວມທັງຕົວເລກການເສຍພາສີ, ອາກອນ;

5. ເຮັດໃຫ້ ເຈົ້າຂອງໂຄງການ ຫຼື ຜູ້ຈັດຊື້-ຈັດຈ້າງ ເຂົ້າໃຈຜິດ ກ່ຽວກັບ ຄຸນລັກສະນະ, ຄຸນນະພາບ, ຮູບແບບ ແລະ ສັນຍາລັກອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ເຄື່ອງໝາຍການຄ້າ, ຍີ່ຫໍ້ຂອງສິນຄ້າ;

6. ຂາຍໂຄງການທີ່ຕົນປະມູນໄດ້ ໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກລັດຖະບານ;

7. ໂອນ ຫຼື ມອບ ສິດ, ພັນທະ ແລະ ຜົນປະໂຫຍດ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ທີ່ເກີດຈາກ ສັນຍາ ໃຫ້ ບຸກຄົນ ຫຼື ນິຕິບຸກຄົນອື່ນທີ່ບໍ່ກ່ຽວຂ້ອງ ໂດຍບໍ່ໄດ້ຮັບການເຫັນດີເປັນລາຍລັກອັກສອນ ຈາກລັດຖະບານ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ໃນສັນຍາຮ່ວມທຶນ;

8. ໂຄສະນາທຸກຮູບແບບ ເພື່ອເປັນການຊຸກຍູ້, ສົ່ງເສີມ ການກໍ່ສ້າງ ແລະ/ຫຼື ການສ້ອມແປງ, ການສະໜອງສິນຄ້າ ແລະ/ຫຼື ການບໍລິການ ທີ່ເປັນການລະເມີດກົດໝາຍ;

9. ແອບອ້າງຜົນງານ ຫຼື ຊື່ສຽງຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ, ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດ;

10. ກະທຳ ຫຼື ເຄື່ອນໄຫວ ທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ຂອງຊາດ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 69 ປະເພດການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ເອກະຊົນ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂຮ້ອງຟ້ອງຕໍ່ສານ.

### ມາດຕາ 70 ການແກ້ໄຂດ້ວຍການປະນີປະນອມກັນ

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄູ່ກໍລະນີສາມາດດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມກັນ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

### ມາດຕາ 71 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງ ສາມາດສະເໜີຂໍ້ຂັດແຍ່ງ ຜ່ານຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອນຳສະເໜີຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງພາກລັດ ແລະ ພາກເອກະຊົນ ພິຈາລະນາແກ້ໄຂຕາມກົດໝາຍ.

### ມາດຕາ 72 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄູ່ກໍລະນີສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໂດຍໄດ້ຮັບການຢັ້ງຢືນ ຈາກສານປະຊາຊົນ ຂອງ ສປປ ລາວ.

ສານປະຊາຊົນ ຂອງ ສປປ ລາວ ຈະພິຈາລະນາຢັ້ງຢືນຄໍາຕັດສິນຂອງກໍາມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຄູ່ກໍລະນີ ຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄໍາຕັດສິນຂອງກໍາມະການຕັດສິນຕ່າງປະເທດ ຫຼື ສາກົນ;

2. ບໍ່ຂັດກັບລັດຖະທໍາມະນູນ, ກົດໝາຍ ແລະ ລະບຽບການກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;

3. ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນ ຢູ່ ສປປ ລາວ.

ພາຍຫຼັງຄໍາຕັດສິນຂອງກໍາມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ຖືກຮັບຮູ້ ແລະ ຢັ້ງຢືນຈາກສານປະຊາຊົນ ຂອງ ສປປ ລາວ ແລ້ວ ກໍໃຫ້ຈັດຕັ້ງປະຕິບັດຄໍາຕັດສິນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄໍາຕັດສິນຂອງສານ ຂອງ ສປປ ລາວ.

ສໍາລັບ ການແກ້ໄຂຂໍ້ຂັດແຍ່ງການລົງທຶນທີ່ໄດ້ມີສັນຍາກັບລັດຖະບານ ໃຫ້ປະຕິບັດຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

**ມາດຕາ 73 ການແກ້ໄຂຮ້ອງຟ້ອງຕໍ່ສານ**

ໃນກໍລະນີ ເກີດມີຂໍ້ຂັດແຍ່ງກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຄູ່ກໍລະນີຝ່າຍໃດ ຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ຕາມກົດໝາຍ ຂອງ ສປປ ລາວ ຫຼື ຕ່າງປະເທດ ທີ່ ສປປ ລາວ ເປັນພາຄີ. ເມື່ອມີຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ມີຜົນສັກສິດບັງຄັບປະຕິບັດຕໍ່ຄູ່ກໍລະນີ.

# ພາກທີ IX
# ການຄຸ້ມຄອງ ແລະ ການກວດກາ ວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ

## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 74 ອົງການຄຸ້ມຄອງ**

ລັດຖະບານ ຄຸ້ມຄອງວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ;
2. ພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ;
3. ຫ້ອງການແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 75 ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ**

ໃນການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ກະຊວງແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ແລະ ໂຄສະນາ ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ສ້າງແຜນການ, ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ຄູ່ມື ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

3. ສ້າງ ແລະ ຄຸ້ມຄອງລະບົບຂໍ້ມູນ ຂ່າວສານ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

4. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອ ຄົ້ນຄວ້າ, ສັງລວມ, ເຈລະຈາສັນຍາ ແລະ ຕາງໜ້າລັດຖະບານລົງນາມໃນສັນຍາ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມການມອບໝາຍຂອງລັດຖະບານ;

5. ຄົ້ນຄວ້າ ແລະ ນໍາສະເໜີ ການໂຈະ, ປັບປຸງ ຫຼື ຍົກເລີກ ໂຄງການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

6. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນຂອບເຂດທົ່ວປະເທດ;

7. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ;

8. ຊີ້ນໍາ ແລະ ອໍານວຍຄວາມສະດວກ ໃນການບໍລິການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ;

9. ສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

11. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ**

ໃນການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພະແນກແຜນການ ແລະ ການລົງທຶນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນແຂວງ ເພື່ອຄົ້ນຄວ້າ ແລະ ສັງລວມ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລ້ວນຳສະເໜີ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເພື່ອສະເໜີ ຕໍ່ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາ;

3. ປະສານສົມທົບກັບບັນດາຂະແໜງການທ້ອງຖິ່ນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃນທ້ອງຖິ່ນຕົນ;

4. ຊຸກຍູ້, ຕິດຕາມ ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການ ລວມທັງການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

5. ອຳນວຍຄວາມສະດວກ ໃນການດຳເນີນການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມການມອບໝາຍ ຂອງຂັ້ນເທິງ;

7. ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

8. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ພາຍໃນແຂວງຂອງຕົນ ຕໍ່ ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ການມອບໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ ຂອງຫ້ອງການ ແຜນການ ແລະ ການລົງທຶນ ເມືອງ, ເທດສະບານ, ນະຄອນ**

ໃນການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຫ້ອງການ ແຜນການ ແລະ ການລົງທຶນ, ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ ຜັນຂະຫຍາຍ, ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມຄວາມຮັບຜິດຊອບຂອງຕົນ;

2. ຊຸກຍູ້, ຕິດຕາມ ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການ ລວມທັງການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມຄວາມຮັບຜິດຊອບຂອງຕົນ;

3. ປະສານສົມທົບກັບບັນດາຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນ ຂອງຕົນ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນບັນດາໂຄງການ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມຄວາມຮັບຜິດຊອບຂອງຕົນ;

4. ອຳນວຍຄວາມສະດວກ, ສະໜັບສະໜູນການເຄື່ອນໄຫວ ວຽກງານການເຄື່ອນໄຫວ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຊອບຂອງຕົນ;

5. ເກັບກຳຂໍ້ມູນກ່ຽວກັບການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຢູ່ໃນເມືອງຂອງຕົນ;

6. ສະເໜີການສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

8. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

9. ນຳ;ໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 78 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ຂະແໜງການອື່ນ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບຕາມພາລະບົດບາດຂອງຕົນ ໃນການ ຮ່ວມມື, ຄຸ້ມຄອງ, ຕິດຕາມ ກວດກາ, ຈັດຕັ້ງປະຕິບັດ, ປະສານສົມທົບ, ອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບນີ້ ແລະ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ການກວດກາ

**ມາດຕາ 79 ອົງການກວດກາ**

ອົງການກວດກາວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 74 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນເຈົ້າການປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມ ກວດກາ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 80 ເນື້ອໃນການກວດກາ**

ການເຄື່ອນໄຫວ ຂອງໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທັງໝົດ ລ້ວນແລ້ວແຕ່ໄດ້ຮັບການຄຸ້ມຄອງ, ຕິດຕາມ ກວດກາ ຈາກອົງການກວດກາວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 79 ຂອງດຳລັດສະບັບນີ້.

ເນື້ອໃນການກວດກາ ມີ ດັ່ງນີ້:

1. ກວດກາ ການປະຕິບັດສັນຍາການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ;

2. ກວດກາການປະຕິບັດຂັ້ນຕອນຂອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;

3. ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ລວມທັງຜົນກະທົບຕໍ່ຊັບສິນຂອງລັດ, ປະຊາຊົນ, ຜູ້ລົງທຶນ ແລະ ຜູ້ພັດທະນາ;

4. ກວດກາ ການປະຕິບັດມາດຕະການຄວາມປອດໄພຂອງແຮງງານ;

5. ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ອົງການກວດກາວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ມີສິດສະເໜີມາດຕະການແກ້ໄຂຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ.

### ມາດຕາ 81 ຮູບການການກວດກາ

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງ ຄັ້ງ ຕໍ່ປີ ໂດຍແມ່ນ ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 82 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນການຊຸກຍູ້, ສົ່ງເສີມ ແລະ ດຶງດູດ ການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຢ່າງມີປະສິດທິຜົນສູງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 83 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ, ລະບຽບການ, ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ແລະ ຂໍ້ຫ້າມ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນທາງແພ່ງ ຫຼື ທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 84 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 85 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງ ທີ່ໄດ້ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ຈະຖືກລົງວິໄນຕາມຕາມແຕ່ກໍລະນີ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ພ້ອມທັງບັນທຶກໄວ້ໃນສຳນວນຊີວິປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ຖືກວິໄນນັ້ນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 86 ມາດຕະການປັບໄໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້, ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ໄດ້ກໍ່ຄວາມເສຍຫາຍ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 87 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ, ລະບຽບການ, ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຊັບສິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງຮັບຜິດຊອບ ໃຊ້ແທນຄ່າເສຍຫາຍ ທີ່ຕົນກໍ່ຂຶ້ນ.

**ມາດຕາ 88 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້, ກົດໝາຍ, ລະບຽບການ, ສັນຍາລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມທີ່ກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 89 ການຈັດຕັ້ງປະຕິບັດ**

ບັນດາພາກສ່ວນທີ່ກ່ຽວຂ້ອງ, ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ຫ້ອງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ, ບັນດາກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ

ແລະ ບັນດາ ບໍລິສັດໂຄງການ, ຜູ້ພັດທະນາ ຫຼື ນັກລົງທຶນທີ່ມີສ່ວນຮ່ວມໃນໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ຕ້ອງປະຕິບັດຕາມດຳລັດ ແລະ ລະບຽບການຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງ ເຂັ້ມງວດ.

**ມາດຕາ 90 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດ ທາງລັດຖະການ ສິບຫ້າວັນ ວັນລັດຖະການ.

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ສຳລັບໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ນັບແຕ່ວັນດຳລັດສະບັບນີ້ມີຜົນສັກສິດ, ສ່ວນ ໂຄງການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ພາກເອກະຊົນ ທີ່ໄດ້ຮັບການອະນຸມັດແລ້ວ ແມ່ນບໍ່ຈຳເປັນຕ້ອງໄດ້ມີການປະມູນຄືນ ແຕ່ການຈັດຕັ້ງປະຕິບັດໂຄງການລົງທຶນຮ່ວມ ນັ້ນ ຕ້ອງດຳເນີນພາຍໃຕ້ ດຳລັດສະບັບນີ້.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**